# ບົດລາຍງານ ສະພາບຂອງໄວໜຸ່ມ ໃນ ສປປ ລາວ

ຈາກການສຳຫຼວດດັດຊະນີໝາຍສັງຄົມລາວ
ຄັ້ງທີ II ປີ 2017

LAO STATISTICS BUREAU

UNFPA

ນະຄອນຫຼວງວຽງຈັນ, ທັນວາ 2021

# ບົດລາຍງານ ສະພາບຂອງໄວໜຸ່ມ ໃນ ສປປ ລາວ

ຈາກການສາຫຼວດດັດຊະນີໝາຍສັງຄົມລາວ
ຄັ້ງທີ II ປີ 2017

ນະຄອນຫຼວງວຽງຈັນ, ທັນວາ 2021

# ຄຳນຳ

ຂໍ້ມູນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ປີ 2015 ສະແດງໃຫ້ເຫັນວ່າ ສປປ ລາວ ມີພົນລະເມືອງໜຸ່ມ ທີ່ມີອາຍຸຕໍ່າກວ່າ 25 ປີ ກວມເອົາ 60 ສ່ວນຮ້ອຍ ຂອງພົນລະເມືອງລາວທັງໝົດ ແລະ ຫຼາຍກວ່າ 20 ສ່ວນຮ້ອຍ ຂອງພົນລະເມືອງລາວ ແມ່ນມີເກນອາຍຸລະຫວ່າງ 15 ຫາ 24 ປີ. ໄວໜຸ່ມແມ່ນກ້ອນກຳລັງແຮງງານທີ່ສຳຄັນຂອງຊາດ ທີ່ປະກອບສ່ວນພັດທະນາປະເທດຊາດ ໃນປະຈຸບັນ ແລະ ອະນາຄົດ. ອີງໃສ່ຄວາມຮຽກຮ້ອງຕ້ອງການໃນການຜະລິດສະຖິຕິທາງການ ຕາມກົດໝາຍວ່າດ້ວຍສະຖິຕິ (2017) ແລະ ຍຸດທະສາດການພັດທະນາລະບົບສະຖິຕິທ່າງຊາດ ແບບຍືນຍົງ 2016-2025 ແລະ ວິໄສທັດຮອດປີ 2030. ນອກນັ້ນ, ເພື່ອເປັນການຕິດຕາມ ແລະ ສະໜອງຂໍ້ມູນໃຫ້ກັບ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງ 9 ປີ 2021-2025 ໂດຍສະເພາະຂໍ້ມູນທີ່ຕິດພັນກັບການພັດທະນາໄວໜຸ່ມໃນ ສປປ ລາວ. ກົມສະຖິຕິສັງຄົມ,ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ຮ່ວມກັບອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA) ຈຶ່ງໄດ້ສ້າງບົດລາຍງານສະພາບຂອງໄວໜຸ່ມ ໃນ ສປປ ລາວ ຈາກການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017 ສະບັບນີ້ຂຶ້ນ.

ບົດລາຍງານສະບັບນີ້ສ່ວນໃຫຍ່ໄດ້ນຳໃຊ້ຂໍ້ມູນຈາກການສຳຫຼວດດັດສະນີໝາຍສັງຄົມລາວ ຄັ້ງທີ II ປີ 2017 ສົມທຽບກັບຂໍ້ມູນຈາກການສຳຫຼວດດັດສະນີໝາຍສັງຄົມລາວ ຄັ້ງທີ I ປີ 2012. ຈຸດປະສົງຫຼັກຂອງການວິໄຈຂໍ້ມູນໃນຄັ້ງນີ້ ເພື່ອສຶກສາກ່ຽວກັບ ສະພາບຂອງໄວໜຸ່ມໃນ ສປປ ລາວ ທີ່ມີອາຍຸລະຫວ່າງ 15-24 ປີ ຢູ່ ສປປ ລາວ ທີ່ຕິດພັນກັບບັນຫາຕ່າງໆເຊັ່ນ: ສະພາບການຈະເລີນພັນການສຶກສາ, ການມີເພດສຳພັນ, ການຄຸມກຳເນີດ, ຄວາມຮູ້ກ່ຽວກັບໂລກເອດສ, ທັດສະນະການໃຊ້ຄວາມຮຸນແຮງໃນຄອບຄົວ, ການເຂົ້າເຖິງສື່ມວນຊົນ ແລະ ໄອຊີທີ ແລະ ການຊ່ວຍເຫຼືອທາງສັງຄົມ. ບົດລາຍງານສະໄວໜຸ່ມ ໃນ ສປປ ລາວ ສະບັບນີ້ ຈະເປັນຂໍ້ມູນທີ່ຈຳເປັນພື້ນຖານສຳລັບການວາງນະໂຍບາຍ ແລະ ວາງແຜນພັດທະນາກ່ຽວກັບວຽກງານດ້ານສຸຂະພາບຈະເລີນພັນ, ການສຶກສາ, ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ວາງແຜນຄອບຄົວ ຂອງໄວໜຸ່ມໃນ ສປປ ລາວ. ພ້ອມນີ້ ກໍ່ຍັງເປັນສ່ວນໜຶ່ງໃນສະໜອງຂໍ້ມູນໃນການຕິດຕາມການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຫ່ງຊາດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ໃນແຕ່ລະໄລຍະ.

ໃນກາລະໂອກາດຄັ້ງນີ້, ໃນນາມ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ຂ້າພະເຈົ້າ ຂໍສະແດງ ຄວາມຂອບໃຈ ຢ່າງຈິງໃຈຕໍ່ທຸກພາກສ່ວນ ອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງສາກົນ ໂດຍສະເພາະແມ່ນອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA) ໃນການປະກອບສ່ວນໃຫ້ການສະໜັບສະໜູນທີ່ມີຄ່າຕໍ່ການສ້າງບົດລາຍງານ ສະພາບຂອງໄວໜຸ່ມ ໃນ ສປປ ລາວ ຈາກການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II ປີ 2017 ໃນຄັ້ງນີ້. ພວກເຮົາຫວັງຢ່າງຍິ່ງວ່າ ບົດລາຍງານສະບັບນີ້ ຈະຊ່ວຍສະໜອງບັນດາຂໍ້ມູນທີ່ມີປະໂຫຍດ ແລະ ທັນຕໍ່ກັບເວລາໃນການວາງແຜນນະໂຍບາຍ, ການຕັດສິນບັນຫາ, ການຄົ້ນຄວ້າລົງເລິກ ແລະ ຮັບໃຊ້ຄວາມຕ້ອງການຂອງຜູ້ຊົມໃຊ້ຂໍ້ມູນຢູ່ພາຍໃນ ແລະ ຕ່າງປະເທດ. ອີກເທື່ອໜຶ່ງ, ພວກເຮົາຍິນດີຮັບເອົາຄຳຕຳນິຕຳຊົມຈາກບັນດາທ່ານຜູ້ອ່ານທັງຫຼາຍເພື່ອນຳມາປັບປຸງການເຮັດບົດວິໄຈໃນຄັ້ງຕໍ່ໄປ.

ຫົວໜ້າສູນສະຖິຕິແຫ່ງຊາດ

## ຄະນະຮັບຜິດຊອບການຂຽນບົດລາຍງານ ສະພາບຂອງໄວໜຸ່ມ ໃນ ປປ ລາວ ໂດຍນຳໃຊ້ຂໍ້ມູນຈາກ ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II

### ຄະນະຊີ້ນຳລວມ

1. ທ່ານ ນາງ ພອນສະຫຼີ ສຸກສະຫວັດ, ຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
2. ທ່ານ ນາງ ເພັດສະໝອນ ສອນ, ຮອງຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

### ຄະນະຮັບຜິດຊອບຊີ້ນຳດ້ານວິຊາການ

1. ທ່ານ ນາງ ທິລະດາ ຈັນທະລານຸວົງ, ຫົວໜ້າກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
2. ທ່ານ ວິໄລສຸກ ສີສຸລາດ, ຮອງຫົວໜ້າກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

### ຄະນະວິຊາການຮັບຜິດຊອບການວິໃຈ

1. ທ່ານ ເພັດສະຫວັນ ບຸດລາສີ, ຫົວໜ້າພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
2. ທ່ານ ນາງ ພອງມາລາ ລາຊາສີ, ຮອງຫົວໜ້າພະແນກຄົ້ນຄວ້າ ແລະ ວິໄຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
3. ທ່ານ ປາງຄຳ ທິແກ້ວ, ຮອງຫົວໜ້າພະແນກຄົ້ນຄວ້າ ແລະ ວິໄຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ , ກະຊວງແຜນການ ແລະ ການລົງທຶນ;
4. ທ່ານ ນາງ ເພັດສາຄອນ ບຸນຍາວົງ, ວິຊາການພະແນກຄົ້ນຄວ້າ ແລະ ວິໄຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
5. ທ່ານ ເກດສະດາ ພົມມະຈັນ, ວິຊາການພະແນກທະບຽນສະຖິຕິ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ;
6. ທ່ານ ນາງ ຄຳຄູນເຮືອນ ພົມພັນ, ວິຊາການພະແນກຄົ້ນຄວ້າ ແລະ ວິໄຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
7. ທ່ານ ນຸສອນ ນາມມະນີນິນ, ວິຊາການພະແນກຄົ້ນຄວ້າ ແລະ ວິໄຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.
8. ທ່ານ ບີ ຢ່າງ, ວິຊາການພະແນກຄົ້ນຄວ້າ ແລະ ວິໄຈ, ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# ສາລະບານ

ຄຳນຳ.....1
ສາລະບານ.....3
ສາລະບານຕາຕະລາງ.....5
ສາລະບານຮູບສະແດງ.....6
ສະຫຼຸບຫຍໍ້.....1
ພາກທີ 1: ພາກສະເໜີ.....1
1.1 ຄວາມເປັນມາ ແລະ ຄວາມສຳຄັນ.....1
1.2 ຈຸດປະສົງ.....2
1.3 ຂອບເຂດ ແລະ ວິທີວິທະຍາໃນການຄົ້ນຄວ້າ.....2
1.4 ຂໍ້ຈຳກັດ.....2
ພາກທີ 2: ຄຸນລັກສະນະທາງດ້ານປະຊາກອນຂອງໄວໜຸ່ມ.....3
2.1 ອາຍຸ ແລະ ເພດຂອງພົນລະເມືອງໜຸ່ມ.....3
2.2 ການສຶກສາ ແລະ ການຮູ້ໜັງສື.....4
ພາກທີ 3: ການຈະເລີນພັນ ແລະ ສຸຂະພາບຂອງແມ່.....9
3.1 ອັດຕາການຈະເລີນພັນຂອງໄວໜຸ່ມ.....9
3.2 ການເກີດລູກກ່ອນໄວ.....9
3.3 ການເປັນພໍ່ ກ່ອນໄວ.....14
3.4 ການດູແລກ່ອນເກີດຂອງໄວໜຸ່ມ.....17
3.5 ການເບິ່ງແຍງການເກີດລູກ.....23
3.6 ການດູແລຫຼັງການເກີດລູກຢູ່ສະຖານທີ່ໃຫ້ບໍລິການດ້ານສາທາລະນະສຸກ.....24
3.7 ການດູແລຫຼັງການເກີດ.....28
3.8 ການຕິດຕາມດູແລຫຼັງເກີດສຳລັບເດັກເກີດໃໝ່.....29
3.9 ການກວດສຸຂະພາບແມ່ຫຼັງເກີດ.....31
ພາກທີ 4: ການແຕ່ງງານ ແລະ ພຶດຕິກຳທາງເພດ.....36
4.1 ການແຕ່ງງານ.....36
4.2 ການແຕ່ງງານກ່ອນໄວ ແລະ ມີຄູ່ສົມລົດຫຼາຍຄົນ (ສຳລັບໄວໜຸ່ມຊາຍ).....41
4.3 ຄວາມແຕກຕ່າງລະຫວ່າງອາຍຸຂອງຜົວ ແລະ ເມຍ.....46
4.4 ພຶດຕິກຳທາງເພດ.....47
ພາກທີ 5 :ການວາງແຜນຄອບຄົວຂອງໄວໜຸ່ມ.....59
5.1 ການຄຸມກຳເນີດ.....59
5.2 ການວາງແຜນຄອບຄົວໂດຍການນຳໃຊ້ວິທີການໃດໜຶ່ງ.....65
ພາກທີ 6: ຄວາມຮູ້ກ່ຽວກັບເຊື້ອ (ເຮສໄອວີ) ພະຍາດເອດ/HIV/AIDS).....73
6.1 ຄວາມຮູ້ກ່ຽວກັບ ເຊື້ອ (ເຮສໄອວີ) ພະຍາດເອດ/HIV/AIDS).....73
6.2 ຄວາມຮູ້ກ່ຽວກັບການຕິດຕໍ່ເຊື້ອ (ເຮສໄອວີ) ພະຍາດເອດ/HIV/AIDS) ຈາກແມ່ສູ່ລູກ.....80

6.3 ທັດສະນະຄະຕິຕໍ່ກັບຜູ້ທີ່ດໍາລົງຊີວິດຮ່ວມກັບຜູ້ຕິດເຊື້ອ (ເຮສໄອວີ) ພະຍາດເອດ/HIV/AIDS).87
6.4 ຄວາມຮູ້ກ່ຽວກັບສະຖານທີ່ການກວດຫາເຊື້ອ (ເຮສໄອວີ) ພະຍາດເອດ/HIV/AIDS)..............96
ພາກທີ 7: ທັດສະນະຕໍ່ກັບການໃຊ້ຄວາມຮຸນແຮງໃນຄອບຄົວ..........................................................103
7.1 ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງໃນຄອບຄົວ..........................................................103
ພາກທີ 8: ການເຂົ້າເຖິງສື່ສານມວນຊົນ ແລະ ໄອຊີທີ..........................................................107
8.1 ການເຂົ້າເຖິງສື່ສານມວນຊົນ ແລະ ຂໍ້ມູນຂ່າວສານ ຫຼື ເຕັກໂນໂລຊີການສື່ສານ........................107
ພາກທີ 9: ການໄດ້ຮັບການຊ່ວຍເຫຼືອທາງສັງຄົມ..........................................................120
9.1 ການຊ່ວຍເຫຼືອທາງສັງຄົມຂອງໄວໜຸ່ມຍິງ ອາຍຸ 24-15 ປີ..........................................................120
9.2 ການຊ່ວຍເຫຼືອທາງສັງຄົມຂອງໄວໜຸ່ມຊາຍ ອາຍຸ 24-15 ປີ..........................................................125
ຂໍ້ສະເໜີແນະ..........................................................129
ເອກະສານອ້າງອີງ..........................................................130
ເອກະສານຊ້ອນທ້າຍ..........................................................131

# ສາລະບານຕາຕະລາງ


ຕາຕະລາງ 2.1. ຈຳນວນຕົວແທນຂອງການສຳຫຼວດ LSIS II, 2017 ........ 4

ຕາຕະລາງ 3.1. ອັດຕາການຈະເລີນພັນຂອງໄວໜຸ່ມ ........ 9

ຕາຕະລາງ 3.2. ການເກີດລູກກ່ອນໄວ ຂອງໄວໜຸ່ມຍິງ ອາຍຸ 15-24 ປີ ........ 11

ຕາຕະລາງ 3.3. ການເປັນພໍ່ກ່ອນໄວອາຍຸ ຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ........ 15

ຕາຕະລາງ 3.4. ສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ........ 17

ຕາຕະລາງ 3.5. ການດູແລກ່ອນການກີດລູກຂອງແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ........ 20

ຕາຕະລາງ 3.6. ອັດຕາສ່ວນການແຈກຢາຍຂອງແມ່ຍິງ 15-24 ປີ ທີ່ເກີດລູກມີຊີວິດ ........ 23

ຕາຕະລາງ 3.7. ການຊ່ວຍເຫຼືອໃນເວລາເກີດລູກ ຂອງແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ........ 26

ຕາຕະລາງ 3.8. ການດູແລຫຼັງການເກີດຂອງແມ່ຍິງອາຍຸ 15-24 ປີ ທີ່ເກີດລູກມີຊີວິດ ........ 28

ຕາຕະລາງ 3.9. ການດູແລຫຼັງເກີດສຳລັບເດັກເກີດໃຫມ່ ........ 29

ຕາຕະລາງ 3.10. ການດູແລຫຼັງເກີດສຳລັບເດັກເກີດໃຫມ່ ພາຍຫຼັງໜຶ່ງອາທິດຫຼັງເກີດ ........ 30

ຕາຕະລາງ 3.11. ການກວດສຸຂະພາບແມ່ຫຼັງເກີດ ຂອງແມ່ຍິງ ອາຍຸ 15-24 ປີ ການເກີດມີຊີວິດຄັ້ງສຸດທ້າຍ ........ 32

ຕາຕະລາງ 3.12. ການຢ້ຽມຢາມດູແລເບິ່ງແຍງແມ່ຫຼັງເກີດລູກ ຂອງແມ່ຍິງ ອາຍຸ 15-24 ປີ ການເກີດມີຊີວິດ ........ 34

ຕາຕະລາງ 3.13. ການຕິດຕາມດູແລເບິ່ງແຍງພາຍຫຼັງການເກີດ ສຳລັບແມ່ ແລະ ເດັກເກີດ ........ 35

ຕາຕະລາງ 4.1. ການແຕ່ງງານກ່ອນໄວ ແລະ ມີຄູ່ສົມລົດຫຼາຍຄົນ (ສຳລັບໄວໜຸ່ມຍິງ) ........ 38

ຕາຕະລາງ 4.2. ການແຕ່ງງານກ່ອນໄວ ແລະ ມີຄູ່ສົມລົດຫຼາຍຄົນ (ສຳລັບໄວໜຸ່ມຊາຍ) ........ 43

ຕາຕະລາງ 4.3. ຕົວຊີ້ບອກພຶດຕິກຳທາງເພດ (ສຳລັບໄວໜຸ່ມຍິງ) ........ 50

ຕາຕະລາງ 4.4. ຕົວຊີ້ບອກພຶດຕິກຳທາງເພດ (ສຳລັບໄວໜຸ່ມຊາຍ) ........ 56

ຕາຕະລາງ 5.1. ການນຳໃຊ້ວິທີຄຸມກຳນິດ (ປະຈຸບັນແຕ່ງງານ ຫຼື ຢູ່ຮ່ວມກັນ) ຂອງແມ່ຍິງ ອາຍຸ 15-24 ປີ ........ 61

ຕາຕະລາງ 5.2. ການນຳໃຊ້ວິທີຄຸມກຳເນີດ (ປະຈຸບັນແຕ່ງງານ ຫຼື ຢູ່ຮ່ວມກັນ) ຂອງແມ່ຍິງ ອາຍຸ 15-24 ປີ ........ 64

ຕາຕະລາງ 5.3. ການວາງແຜນຄອບຄົວໂດຍການນຳໃຊ້ວິທີການໃດໜຶ່ງ ແມ່ຍິງ ອາຍຸ 15-24 ປີ ........ 66

ຕາຕະລາງ 5.4. ການວາງແຜນຄອບຄົວໂດຍການນຳໃຊ້ວິທີການໃດໜຶ່ງ ຂອງຊາຍ ອາຍຸ 15-24 ປີ ........ 70

ຕາຕະລາງ 6.1.ຄວາມຮູ້ກ່ຽວກັບການຕິດຕໍ່ກັນຂອງເຊື້ອ ເຮສໄອວີ/ພະຍາດເອດ (ສຳລັບໄວໜຸ່ມຍິງ) ........ 74

ຕາຕະລາງ 6.2. ຄວາມຮູ້ກ່ຽວກັບການຕິດຕໍ່ກັນຂອງເຊື້ອ ເຮສໄອວີ/ພະຍາດເອດ (ສຳລັບໄວໜຸ່ມຊາຍ) ........ 77

ຕາຕະລາງ 6.3. ຄວາມຮູ້ກ່ຽວກັບການຕິດຕໍ່ກັນຂອງເຊື້ອ ເຮສໄອວີ/ພະຍາດເອດ ຈາກແມ່ສູ່ລູກ ຂອງໄວໜຸ່ມຍິງ ອາຍຸ 15-24 ປີ ........ 81

ຕາຕະລາງ 6.4. ຄວາມຮູ້ກ່ຽວກັບການຕິດຕໍ່ກັນຂອງເຊື້ອ ເຮສໄອວີ/ພະຍາດເອດ (HIV/AIDS) ຈາກແມ່ສູ່ລູກຂອງ ໄວໜຸ່ມຊາຍ ອາຍຸ 15-24 ປີ ........ 84

ຕາຕະລາງ 6.5. ທັດສະນະຄະຕິຕໍ່ກັບຜູ້ທີ່ດຳລົງຊີວິດຮ່ວມກັບຕິດເຊື້ອເຮສໄອວີ (ສຳລັບໄວໜຸ່ມຍິງ) ........ 88

ຕາຕະລາງ 6.6. ທັດສະນະຄະຕິຕໍ່ກັບຜູ້ທີ່ດຳລົງຊີວິດຮ່ວມກັບຕິດເຊື້ອ ເຮສໄອວີ (ສຳລັບໄວໜຸ່ມຊາຍ) ........ 92

ຕາຕະລາງ 6.7. ຄວາມຮູ້ກ່ຽວກັບສະຖານທີ່ການກວດເລືອດຫາເຊື້ອ ເຮສໄອວີ (ສຳລັບໄວໜຸ່ມຍິງ) ........ 97

ຕາຕະລາງ 6.8. ຄວາມຮູ້ກ່ຽວກັບສະຖານທີ່ການກວດເລືອດຫາເຊື້ອ ເຮສໄອວີ (ສຳລັບໄວໜຸ່ມຊາຍ) ........ 100

ຕາຕະລາງ 7.1. ອັດຕາສ່ວນຮ້ອຍຂອງໄວໜຸ່ມຍິງ ອາຍຸ 15-24 ປີ ທີ່ຍອມຮັບພຶດຕິກຳຂອງຜົວວ່າຖືກຕ້ອງໃນການ ທຸບຕີເມຍ ........ 104

ຕາຕະລາງ 7.2. ທັດສະນະຄະຕິ ຕໍ່ການໃຊ້ຄວາມຮຸນແຮງໃນຄອບຄົວ ຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ທີ່ຍອມຮັບ ພຶດຕິກຳຂອງຜົວວ່າຖືກຕ້ອງໃນການທຸບຕີເມຍຢູ່ໃນກໍລະນີຕ່າງໆ ........ 106

ຕາຕະລາງ 8.1. ການນຳໃຊ້ສື່ສານມວນຊົນ ໄວໜຸ່ມຍິງ ອາຍຸ 15-24 ປີ ໄດ້ຊົມໃຊ້ສື່ສານມວນຊົນ ຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດ.......108
ຕາຕະລາງ 8.2. ການນຳໃຊ້ສື່ສານມວນຊົນ ໄວໜຸ່ມຊາຍ ອາຍຸ 15-24 ປີ ໄດ້ຊົມໃຊ້ສື່ສານມວນຊົນ ຢ່າງໜ້ອຍໜຶ່ງຄັ້ງຕໍ່ອາທິດ.......110
ຕາຕະລາງ 8.3. ການນຳໃຊ້ຂໍ້ມູນຂ່າວສານ ຫຼື ເຕັກໂນໂລຊີໃນການສື່ສານ (ICT) ຂອງໄວໜຸ່ມຍິງ ອາຍຸ 15-24 ປີ.......113
ຕາຕະລາງ 8.4. ການນຳໃຊ້ຂໍ້ມູນຂ່າວສານ ຫຼື ເຕັກໂນໂລຊີໃນການສື່ສານ (ICT) ຂອງໄວໜຸ່ມຊາຍ ອາຍຸ 15-24 ປີ.......117
ຕາຕະລາງ 9.1. ການປົກຄຸມປະກັນສຸຂະພາບ ຂອງໄວໜຸ່ມຍິງ ອາຍຸ 15-24 ປີ.......122
ຕາຕະລາງ 9.2. ການປົກຄຸມປະກັນສຸຂະພາບ ຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ດີ.......126

## ສາລະບານຮູບສະແດງ

ຮູບສະແດງ 2.1. ສ່ວນຮ້ອຍ ແລະ ອັດຕາສ່ວນຂອງໄວໜຸ່ມ ອາຍຸ 15-24 ປີ ໃນປີ 2011 ແລະ 2017.......3
ຮູບສະແດງ 2.2. ອັດຕາການຮູ້ໜັງສືຂອງໄວໜຸ່ມ ອາຍຸ 15-24 ແບ່ງຕາມເພດ, ເຂດທີ່ພັກອາໄສ ແລະ ພາກ.......5
ຮູບສະແດງ 2.3. ອັດຕາການຮູ້ໜັງສືຂອງໄວໜຸ່ມຍິງ ອາຍຸ 15-24 ປີ ທຽບ ການສຳຫຼວດ LSIS I, 2011 ແລະ LSIS II, 2017.......6
ຮູບສະແດງ 2.4. ອັດຕາການຮູ້ໜັງສືຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ທຽບ ການສຳຫຼວດ LSIS I, 2011 ແລະ LSIS II, 2017.......8

## ສະຫຼຸບຫຍໍ້

### ອາຍຸ ແລະ ເພດຂອງພົນລະເມືອງໜຸ່ມ

ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ I, ພົນລະເມືອງໜຸ່ມທີ່ມີອາຍຸລະຫວ່າງ 15-24 ປີ ມີ 17,235 ຄົນ ໃນນັ້ນ ມີເພດຊາຍ 8,437 ຄົນ ກວມເອົາ 49 ສ່ວນຮ້ອຍ, ມີແມ່ຍິງ 8,798 ຄົນ ກວມເອົາ 51 ສ່ວນຮ້ອຍ. ການສຳຫຼວດດັດຊະນີໝາຍສັງຄົມລາວ ຄັ້ງທີ II, ພົນລະເມືອງໜຸ່ມທີ່ມີອາຍຸລະຫວ່າງ 15-24 ປີ ຈຳນວນທັງໝົດ 17,782 ຄົນ ເຊິ່ງໃນນີ້ເພດຊາຍມີຈຳນວນ 8,920 ຄົນ ເທົ່າກັບ 50.2 ສ່ວນຮ້ອຍ, ມີແມ່ຍິງ 8,862 ຄົນ ກວາມເອົາ 49.8 ສ່ວນຮ້ອຍ.

### ການສຶກສາ ແລະ ການຮູ້ໜັງສື

ອັດຕາການຮູ້ໜັງສືຂອງໄວໜຸ່ມຍິງແມ່ນ 76.5 ສ່ວນຮ້ອຍ ແລະ ໄວໜຸ່ມຊາຍແມ່ນ 84.6 ສ່ວນຮ້ອຍ. ສ່ວນຮ້ອຍຂອງການຮູ້ໜັງສືຂອງຄົນໃນເຂດຕົວເມືອງສຳລັບແມ່ຍິງແມ່ນ 93.2 ສ່ວນຮ້ອຍ ແລະ ສຳລັບເພດຊາຍແມ່ນ 94.4 ສ່ວນຮ້ອຍ. ໃນຂະນະທີ່ຢູ່ໃນເຂດຊົນນະບົດການຮູ້ໜັງສືຂອງແມ່ຍິງ ແມ່ນ 69.3 ສ່ວນຮ້ອຍ ແລະ ເພດຊາຍແມ່ນ 80.5 ສ່ວນຮ້ອຍ.

### ອັດຕາການຈະເລີນພັນ

ປີ 2017, ອັດຕາການຈະເລີນພັນລວມ (TFR) ແມ່ຍິງອາຍຸ 15-49 ປີ ຂອງພົນລະເມືອງ ລາວ ແມ່ນ 2.7 ຄົນ TFR ໃນເຂດຊົນນະບົດ 3.0 ຄົນ. TFR ໃນເຂດຕົວເມືອງແມ່ນ 2.1 ຄົນ. ໃນໄລຍະການສຳຫຼວດດັດສະນີໝາຍສັງຄົມລາວ ປີ 2017, ອັດຕາການຈະເລີນພັນແບ່ງຕາມໝວດອາຍຸຂອງຜູ້ຍິງ 15-49 ປີ ຢູ່ໃນເຂດຊົນນະບົດ ແມ່ນມີອັດຕາຈະເລີນພັນສູງສຸດ ຢູ່ທີ່ໝວດອາຍຸ 20-24 ປີ, ໃນຂະນະດຽວກັນ ໃນເຂດຕົວເມືອງແມ່ນໝວດອາຍຸ 25-29 ປີ.

### ການເກີດລູກກ່ອນໄວ

ໃນ ສປປ ລາວ ການເກີດລູກກ່ອນໄວ ຂອງແມ່ຍິງລາວ ແມ່ນມີອັດຕາສ່ວນສູງ ຄືປະມານ 13.4 ສ່ວນຮ້ອຍຂອງແມ່ຍິງອາຍຸ 15-19 ປີທີ່ໄດ້ເກີດລູກມີຊີວິດໜຶ່ງຄົນ ແລະ ເກີດກ່ອນອາຍຸ 15 ປີ ແມ່ນມີສູງເຖິງ 1.8 ສ່ວນຮ້ອຍ. ແມ່ຍິງຢູ່ໃນເຂດຊົນນະບົດ ແມ່ນມີອັດຕາການເກີດລູກກ່ອນໄວອາຍຸ ສູງກວ່າເຂດຕົວເມືອງ (ຊົນນະບົດ 16.2 ສ່ວນຮ້ອຍ ແລະ ຕົວເມືອງ 6.4 ສ່ວນຮ້ອຍຂອງແມ່ຍິງອາຍຸ 15-19 ປີ ໄດ້ເກີດລູກມີຊີວິດໜຶ່ງຄົນ). ສຳລັບ ແມ່ຍິງລາວ ອາຍຸ 20-24 ປີ ແມ່ນມີການເກີດລູກກ່ອນອາຍຸ 15 ປີ ແມ່ນມີສູງເຖິງ 18.4 ສ່ວນຮ້ອຍ.

### ການເປັນພໍ່ກ່ອນໄວ

ການເປັນພໍ່ກ່ອນໄວ (ໄວໜຸ່ມຊາຍອາຍຸ 15-19 ປີ) ແມ່ນມີອັດຕາສ່ວນບໍ່ສູງຫຼາຍຖ້າທຽບກັບແມ່ຍິງອາຍຸໃນໄວດຽວກັນ ມີປະມານ 2.7 ສ່ວນຮ້ອຍແມ່ນໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ ແລະ ໄດ້ເປັນພໍ່ຂອງເດັກເກີດລູກມີຊີວິດໜຶ່ງຄົນ ກ່ອນອາຍຸ 15 ປີ ແມ່ນມີປະມານ 0.3 ສ່ວນຮ້ອຍ.

### ການດູແລກ່ອນເກີດ

ໃນ ສປປ ລາວ ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ແລະ ໄດ້ຮັບການດູແລຢ່າງໜ້ອຍໜຶ່ງຄັ້ງ ໂດຍແພດທີ່ມີຄວາມຊຳນານ ມີປະມານ 78 ສ່ວນຮ້ອຍ ເຊິ່ງສ່ວນໃຫ່ຍແລ້ວ ແມ່ນໄດ້ຮັບການດູແລຈາກທ່ານໝໍ ປະມານ 56 ສ່ວນຮ້ອຍ ແລະ 20 ສ່ວນຮ້ອຍ ແມ່ນໄດ້ຮັບການດູແລຈາກພະຍາບານ/ຜະດຸງຄັນ. ໃນ ສປປ ລາວ ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ແລະ ໄດ້ຮັບການດູແລກ່ອນເກີດ 1-3 ຄັ້ງ ໂດຍ ແພດທີ່ມີຄວາມຊຳນານ ມີປະມານ 22.3 ສ່ວນຮ້ອຍ ແລະ ໄດ້ຮັບການດູແລກ່ອນເກີດ 4 ຄັ້ງ ຫຼື ຫຼາຍກວ່າ ມີປະມານ 60.0 ສ່ວນຮ້ອຍ.

## ການເບິ່ງແຍງການເກີດລູກ

ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ໄດ້ຮັບເກີດລູກຢູ່ສະຖານທີ່ບໍລິການສາທາລະນະສຸກ ມີປະມານ 63.2 ສ່ວນຮ້ອຍ ເຊິ່ງສ່ວນໃຫ່ຍແລ້ວ ແມ່ນໄດ້ເກີດຢູ່ໂຮງໝໍລັດ ມີປະມານ 62.4 ສ່ວນຮ້ອຍ ແລະ 0.8 ສ່ວນຮ້ອຍແມ່ນໄດ້ເກີດຢູ່ສະຖານທີ່ບໍລິການສາທາລະນະສຸກພາກເອກະຊົນ.

## ການພັກຟື້ນຫຼັງການເກີດລູກຢູ່ສະຖານທີ່ໃຫ້ບໍລິການດ້ານສາທາລະນະສຸກ

ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ແລະ ໄດ້ຮັບການຊ່ວຍເກີດ ໂດຍແພດທີ່ມີຄວາມຊໍານານ ມີປະມານ 62.2 ສ່ວນຮ້ອຍ ເຊິ່ງສ່ວນໃຫ່ຍແລ້ວແມ່ນໄດ້ຮັບການຊ່ວຍເກີດຈາກທ່ານໝໍປະ ມານ 51.5 ສ່ວນຮ້ອຍ ແລະ 10.7 ສ່ວນຮ້ອຍແມ່ນໄດ້ຮັບການຊ່ວຍເກີດຈາກພະຍາບານ/ຜະດຸງຄັນ.

## ການຢັ້ງມຢາມດູແລຫຼັງເກີດສໍາລັບເດັກເກີດໃຫມ່

ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ທີ່ໄດ້ຮັບການກວດສຸຂະພາບຫຼັງເກີດ ຢູ່ສະຖານທີ່ບໍລິການສາທາລະນະສຸກ ຫຼື ໄດ້ຕິດຕາມຫຼັງເກີດຢູ່ບ້ານ ມີປະມານ 42.8 ສ່ວນຮ້ອຍ. ໃນນັ້ນ, ແມ່ຍິງ ຢູ່ໃນເຂດຊົນນະບົດໄດ້ຮັບການກວດສຸຂະພາບຫຼັງເກີດ ມີປະມານ 38 ສ່ວນຮ້ອຍ ແລະ ຢູ່ເຂດຕົວເມືອງ ມີປະມານ 63 ສ່ວນຮ້ອຍ.

## ການກວດສຸຂະພາບແມ່ຫຼັງເກີດ

ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ທີ່ໄດ້ຮັບການກວດສຸຂະພາບຫຼັງເກີດ ຢູ່ສະຖານທີ່ບໍລິການສາທາລະນະສຸກ ຫຼື ໄດ້ຕິດຕາມຫຼັງເກີດຢູ່ບ້ານ ມີປະມານ 42.4 ສ່ວນຮ້ອຍ. ໃນນັ້ນ, ແມ່ຍິງ ຢູ່ໃນເຂດຊົນນະບົດໄດ້ຮັບການກວດສຸຂະພາບຫຼັງເກີດ ມີປະມານ 37.8 ສ່ວນຮ້ອຍ ແລະ ຢູ່ເຂດຕົວເມືອງ ມີປະມານ 62.2 ສ່ວນຮ້ອຍ.

## ການແຕ່ງງານຂອງໄວໜຸ່ມຍິງ

ໃນ ສປປ ລາວ ແມ່ຍິງລາວ ອາຍຸ 15-24 ປີ ປະຈຸບັນແຕ່ງງານກ່ອນອາຍຸ 15 ປີ ກວມເອົາປະມານ 6.6 ສ່ວນຮ້ອຍ, ແມ່ຍິງອາຍຸ 20-24 ທີ່ແຕ່ງງານກ່ອນອາຍຸ 15 ແລະ 18 ປີ ປະມານ 7.1 ສ່ວນຮ້ອຍ ແລະ ແມ່ຍິງທີ່ແຕ່ງງານກ່ອນອາຍຸ 18 ປີ ປະມານ 32.7 ສ່ວນຮ້ອຍ. ແມ່ຍິງອາຍຸ 15-19 ປີ ປະຈຸບັນແຕ່ງງານ ຫຼື ຢູ່ຮ່ວມກັນ ປະມານ 23.5 ສ່ວນຮ້ອຍ ແລະ ແມ່ຍິງອາຍຸ 15-24 ປີ ທີ່ແຕ່ງງານຫຼາຍຄັ້ງ ຫຼື ຢູ່ຮ່ວມກັນ ປະມານ 2.8 ສ່ວນຮ້ອຍ. ແມ່ຍິງອາຍຸ 20-24 ປີ ໃນເຂດຊົນນະບົດ ທີ່ແຕ່ງງານກ່ອນອາຍຸ 15 ປີ ແລະ 18 ປີ ແມ່ນມີອັດຕາສູງກວ່າຕົວເມືອງ (ກ່ອນ 15 ປີ ຊົນນະບົດ 9.0 ສ່ວນຮ້ອຍ ແລະ ຕົວເມືອງ 3.3 ສ່ວນຮ້ອຍ ແລະ ກ່ອນ 18 ປີ ຊົນນະບົດ 38.5 ສ່ວນຮ້ອຍ ແລະ ຕົວເມືອງ 20.9 ສ່ວນຮ້ອຍ).

## ການແຕ່ງງານຂອງໄວໜຸ່ມຊາຍ

ໃນ ສປປ ລາວ ເພດຊາຍ ອາຍຸ 15-24 ປີ ປະຈຸບັນແຕ່ງງານກ່ອນອາຍຸ 15 ປີ ກວມເອົາປະມານ 1.2 ສ່ວນຮ້ອຍ, ເພດຊາຍ ອາຍຸ 20-24 ທີ່ແຕ່ງງານກ່ອນອາຍຸ 15 ປະມານ 1.8 ສ່ວນຮ້ອຍ ແລະ ເພດຊາຍທີ່ແຕ່ງງານກ່ອນອາຍຸ 18 ປີ ປະມານ 10.8 ສ່ວນຮ້ອຍ. ເພດຊາຍອາຍຸ 15-19 ປີ ປະຈຸບັນແຕ່ງງານ ຫຼື ຢູ່ຮ່ວມກັນ ມີປະມານ 5.9 ສ່ວນຮ້ອຍ ແລະ ເພດຊາຍອາຍຸ 15-24 ປີ ທີ່ແຕ່ງງານຫຼາຍຄັ້ງ ຫຼື ຢູ່ຮ່ວມກັນ ມີປະມານ 2.0 ສ່ວນຮ້ອຍ.

## ຄວາມແຕກຕ່າງລະຫວ່າງອາຍຸຂອງຜົວ ແລະ ເມຍ

ອັດຕາສ່ວນຮ້ອຍຂອງແມ່ຍິງທີ່ແຕ່ງງານແລ້ວໃນກຸ່ມອາຍຸ 15-19 ປີ ເຊິ່ງວ່າຜົວມີອາຍຸໜຸ່ມກວ່າ ກວມເອົາ 6.4 ສ່ວນຮ້ອຍ, ອາຍຸແກ່ກວ່າ 0-4 ປີ ກວມເອົາ 51.8 ສ່ວນຮ້ອຍ, ອາຍຸແກ່ກວ່າ 5-9 ປີ ກວມເອົາ 30.5

ສ່ວນຮ້ອຍ ແລະ ແກ່ກວ່າ 10 ປີຂຶ້ນໄປແມ່ນກວມເອົາ 11.3 ສ່ວນຮ້ອຍ.

### ພຶດຕິກຳທາງເພດ

ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-24 ປີ ທີ່ລາຍງານວ່າເຄີຍການຮ່ວມເພດມີສູງ 50.8 ສ່ວນຮ້ອຍ; ເຄີຍການຮ່ວມເພດກ່ອນອາຍຸ 15 ປີ ມີປະມານ 5.5 ສ່ວນຮ້ອຍ; ເຄີຍຮ່ວມເພດກັບຫຼາຍກວ່າໜຶ່ງຄົນໃນຊ່ວງ 12 ເດືອນຜ່ານມາມີພຽງ 0.6 ສ່ວຍຮ້ອຍ; ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 15-24 ປີທີ່ເຄີຍຮ່ວມເພດໃນຊ່ວງ 12 ເດືອນ ຜ່ານມາກັບເພດຊາຍທີ່ອາຍຸຫຼາຍກວ່າ 10 ປີ ຫຼື ຫຼາຍກວ່ານັ້ນ ກວມອັດຕາສ່ວນເຖິງ 11.5 ສ່ວນຮ້ອຍ; ກັບຊາຍໂສດ/ ຊາຍທີ່ບໍ່ທັນມີຄູ່ ມີພຽງ 6.3 ສ່ວນຮ້ອຍ.

### ການຄຸມກຳເນີດ

ອັດຕາສ່ວນຂອງໄວໜຸ່ມຍິງ ທີ່ມີອາຍຸ ລະຫວ່າງ 15-24 ປີ ທີ່ປະຈຸບັນໄດ້ແຕ່ງງານ ຫຼື ຢູ່ຮ່ວມກັນ ທີ່ໄດ້ນຳໃຊ້ວິທີຄຸມກຳເນີດ ຫຼື ຄູ່ສົມລົດທີ່ນຳໃຊ້ວິທີຄຸມກຳເນີດ ເຊິ່ງໃນຕາຕະລາງນີ້ສະແດງໃຫ້ເຫັນ 50 ສ່ວນຮ້ອຍ ຂອງໄວໜຸ່ມຍິງທີ່ນຳໃຊ້ວິທີຄຸມກຳເນີດ. ວິທີທີ່ນິຍົມໃຊ້ຫຼາຍແມ່ນຢາເມັດ ເຊິ່ງມີ 27.4 ສ່ວນຮ້ອຍ ແລະ ອັດຕາສ່ວນຂອງໄວໜຸ່ມ ຢູ່ໃນກຸ່ມອາຍຸ ລະຫວ່າງ 15-17 ປີ ມີສູງເຖິງ 74.8 ສ່ວນຮ້ອຍ ທີ່ບໍ່ນຳໃຊ້ວິທີຄຸມກຳເນີດ. ປະມານ 2 ສ່ວນຮ້ອຍ ຂອງໄວໜຸ່ມຍິງໄດ້ລາຍງານວ່າ ພວກເຂົາໄດ້ໃຊ້ວິທີຄຸມກຳເນີດແບບທຳມະຊາດ.

### ການວາງແຜນຄອບຄົວໂດຍໃຊ້ວິທີໃດໜຶ່ງ

ໄວໜຸ່ມຍິງ ອາຍຸ 15-24 ປີ ທີ່ແຕ່ງງານແລ້ວ ແລະ ຢູ່ຮ່ວມກັນ ທີ່ໄດ້ມີການວາງແຜນຄອບຄົວດ້ວຍວິທີໃດໜຶ່ງສູງເຖິງ 71.2 ສ່ວນຮ້ອຍ, ໃນນັ້ນ ໄດ້ມີການວາງແຜນດ້ວຍວິທີການແບບທັນສະໄໝ 64.7 ສ່ວນຮ້ອຍ. ສຳລັບ ຄວາມຕ້ອງການລວມກ່ຽວກັບການວາງແຜນຄອບຄົວ ມີ 60.1 ສ່ວນຮ້ອຍ. ໃນນັ້ນ, ໄດ້ມີການວາງແຜນໂດຍການເກີດລູກຫ່າງ 44.9 ສ່ວນຮ້ອຍ ແລະ ການຈຳກັດການເກີດ 15.2 ສ່ວນຮ້ອຍ. ໄວໜຸ່ມຍິງ ອາຍຸ 15-24 ປີ ທີ່ບໍ່ທັນໄດ້ແຕ່ງງານແລ້ວ/ບໍ່ໄດ້ຢູ່ຮ່ວມກັນ ທີ່ໄດ້ມີການວາງແຜນຄອບຄົວດ້ວຍວິທີໃດໜຶ່ງສູງເຖິງ 16.9 ສ່ວນຮ້ອຍ ໃນນັ້ນ ໄດ້ມີການວາງແຜນດ້ວຍວິທີການແບບທັນສະໄໝ 16.9 ສ່ວນຮ້ອຍ ໂດຍບໍ່ໄດ້ມີການວາງແຜນໂດຍໃຊ້ວິທີການແບບອື່ນ. ເຖິງຢ່າງໃດກໍ່ຕາມ, ສິ່ງທີ່ໜ້າເປັນຫ່ວງ ຂອງໄວໜຸ່ມຍິງ ອາຍຸ 15-24 ປີ ປະຈຸບັນບໍ່ທັນໄດ້ແຕ່ງງານ/ບໍ່ໄດ້ຢູ່ຮ່ວມກັນ ກຸ່ມນີ້ແມ່ນ ບໍ່ຢາກມີລູກແຕ່ບໍ່ໄດ້ໃຊ້ວິທີການໃດໆໃນການວາງແຜນຄອບຄົວ ມີສູງເຖິງ 75 ສ່ວນຮ້ອຍ.

### ຄວາມຮູ້ກ່ຽວກັບ ເຊື້ອ ເຮສໄອວີ/ພະຍາດເອດ (HIV/AIDS)

ປະມານ 63 ສ່ວນຮ້ອຍ ຂອງໄວໜຸ່ມຍິງ ແລະ 67 ສ່ວນຮ້ອຍ ຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ແມ່ນເຄີຍໄດ້ຍິນ ກ່ຽວກັບ ໂລກເອດສ. ແມ່ຍິງທີ່ລາຍງານກ່ຽວກັບທັດສະນະຄະຕິແບ່ງແຍກຕໍ່ກັບຜູ້ຕິດເຊື້ອເຮສໄອວີ/ພະຍາດເອດ (HIV/AIDS) ທີ່ສູງກວ່າໝູ່ແມ່ນແຂວງໄຊສົມບູນ ມີ 86.1 ສ່ວຍຮ້ອຍ ແລະ ຮອງລົງມາແມ່ນ ແຂວງຜົ້ງສາລີ ມີ 68.6 ສ່ວນຮ້ອຍ, ສຳລັບສ່ວນຮ້ອຍຂອງໄວໜຸ່ມຊາຍ ອັດຕາສ່ວນທີ່ສູງກວ່າໝູ່ແມ່ນ ແຂວງຫຼວງພະບາງ ເຊິ່ງມີ 69 ສ່ວນຮ້ອຍຮອງລົງມາແມ່ນ ແຂວງໄຊສົມບູນ ມີ 51.9 ສ່ວນຮ້ອຍ. ໄວໜຸ່ມຍິງ ແລະ ໄວໜຸ່ມຊາຍ ທີ່ຮູ້ຈັກບ່ອນໄປກວດເລືອດຫາເຊື້ອ ເຮສໄອວີ/ພະຍາດເອດ (HIV/AIDS) ໃນເຂດຕົວເມືອງ ມີ 36.6 ສ່ວນຮ້ອຍ ແລະ 41.7 ສ່ວນຮ້ອຍ ຕາມລຳດັບ. ໄວໜຸ່ມຍິງ ແລະ ໄວໜຸ່ມຊາຍ ໃນເຂດຊົນນະບົດ ມີ 17.8 ສ່ວນຮ້ອຍ ແລະ 21.2 ສ່ວນຮ້ອຍ ຕາມລຳດັບ.

### ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງໃນຄອບຄົວ

ຜົນການສຳຫຼວດສະແດງໃຫ້ເຫັນວ່າ ໄວໜຸ່ມຍິງ ອາຍຸ 15-24 ປີ ທີ່ໄດ້ໃຫ້ທັດສະນະວ່າຍອມຮັບພຶດຕິກຳຂອງຜູ້ເປັນຜົວ/ຄູ່ຮັກ ໃນການທຸບຕີເມຍ/ຄູ່ຮັກໃນກໍ

ລະນີ້ໃດໜຶ່ງ ມີ 31. 4 ສ່ວນ, ຮອງລົງມາແມ່ນ ຖ້າເມຍຖຽງຄວາມຜົວ/ຄູ່ຮັກ ກວມເອົາ 22.2 ສ່ວນຮ້ອຍ ຖ້າເມຍບໍ່ເບິ່ງລູກ ກວມເອົາ 21.8 ສ່ວນຮ້ອຍ ແລະ ພຶດຕິກຳທີ່ຖືກຕ້ອງໜ້ອຍທີ່ສຸດ ແມ່ນການທີ່ເມຍເຮັດອາຫານໄໝ້ ກວມເອົາ 5.4 ສ່ວນຮ້ອຍ.

## ການເຂົ້າເຖິງສື່ສານມວນຊົນ ແລະ ຂໍ້ມູນຂ່າວສານ ຫຼື ເຕັກໂນໂລຊີການສື່ສານ

ໄວໜຸ່ມຍິງ ອາຍຸ 15-24 ປີ ໃນ ຈຳນວນ 8,590 ຄົນ ມີ 75.6 ສ່ວນຮ້ອຍ ລາຍງານວ່າໄດ້ ເບິ່ງໂທລະພາບອາທິດລະເທື່ອ 17.2 ສ່ວນຮ້ອຍ ຟັງວິທະຍຸ ອາທິດລະເທື່ອ ແລະ ມີພຽງ 7.5 ສ່ວນຮ້ອຍ ໄດ້ອ່ານໜັງສືອາທິດລະເທື່ອ. ໄວໜຸ່ມຊາຍ ອາຍຸ 15-24 ປີ ໄດ້ເບິ່ງໂທລະພາບອາທິດລະເທື່ອ ມີ 83.2 ສ່ວນຮ້ອຍ, ຮອງລົງມາແມ່ນ ໄດ້ເບິ່ງຟັງວິທະຍຸ ອາທິດລະເທື່ອ ມີ 20 ສ່ວນຮ້ອຍ ແລະ ໄດ້ອ່ານ ໜັງສືພິມອາທິດລະເທື່ອ ກວມເອົາ 6.2 ສ່ວນຮ້ອຍ.

## ການຊ່ວຍເຫຼືອທາງສັງຄົມຂອງໄວໜຸ່ມຍິງ ແລະ ຊາຍ ອາຍຸ 15-24 ປີ

ຈາກການສຳພາດ ໄວໜຸ່ມຍິງ ປະ ມານ 9.8 ສ່ວນຮ້ອຍ ທີ່ມີປະກັນສຸຂະພາບ. ໃນນັ້ນ, ປະເພດປະກັນສຸຂະພາບທີ່ໄວໜຸ່ມຍິງໄດ້ເຂົ້າປະກັນຫຼາຍທີ່ສຸດແມ່ນປະກັນສຸຂະພາບພາກລັດຖະກອນ ມີ 57 ສ່ວນຮ້ອຍ, ປະກັນສຸຂະພາບພາກປະຊາຊົນ ມີ 19.1 ສ່ວນຮ້ອຍ,

ປະກັນສຸຂະພາບພາກວິສາຫະກິດ ມີ 13.3 ສ່ວນຮ້ອຍ ປະກັນສຸຂະພາບພາກປະຊາຊົນຜູ້ທຸກຍາກ ມີ 3.8 ສ່ວນຮ້ອຍ. ໄວໜຸ່ມຊາຍ ມີປະມານ 8.1 ສ່ວນຮ້ອຍທີ່ ມີປະກັນສຸຂະພາບ. ໃນນັ້ນ, ປະເພດປະກັນສຸຂະພາບທີ່ໄວໜຸ່ມຊາຍໄດ້ເຂົ້າປະກັນຫຼາຍທີ່ສຸດແມ່ນປະກັນສຸຂະພາບພາກລັດຖະກອນ ມີ 54.4 ສ່ວນຮ້ອຍ, ປະກັນສຸຂະພາບພາກວິສາຫະກິດ ມີ 14.3 ສ່ວນຮ້ອຍປະກັນສຸຂະພາບພາກປະຊາຊົນ ມີ 13.2 ສ່ວນຮ້ອຍ, ປະກັນສຸຂະພາບພາກປະຊາຊົນຜູ້ທຸກຍາກ ມີ 10.1 ສ່ວນຮ້ອຍ.

| ຕາຕະລາງສະຫຼຸບຫຍໍ້ຜົນຂອງການວິໄຈສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວຂອງໄວໜຸ່ມ ໃນ ສປປ ລາວ | | | |
|---|---|---|---|
| **ຕົວຊີ້ບອກ** | **SDG** | **ນິຍາມ** | **ຜົນໄດ້ຮັບ** |
| **ອັດຕາການຮູ້ໜັງສື (ອາຍຸ 15 -24 ປີ)** | | ອັດຕາສ່ວນຂອງປະຊາກອນ ອາຍຸແຕ່ 15 ຫາ 24 ປີ ທີ່ສາມາດອ່ານບົດສົນທະນາສັ້ນ ແລະ ຂໍ້ຄວາມງ່າຍດາຍກ່ຽວກັບຊີວິດປະຈໍາວັນ ຫຼື ຜູ້ທີ່ໄດ້ຮັບການສຶກສາລະດັບມັດທະຍົມຕົ້ນ ຫຼື ມັດທະຍົມປາຍ<br>ກ. ເພດຍິງ<br>ຂ. ເພດຊາຍ | **76.5**<br>**84.6** |
| **ການຮັບຂໍ້ມູນຂ່າວສານ** | | ອັດຕາສ່ວນຂອງໄວໜຸ່ມອາຍຸແຕ່ 15 ຫາ 24 ປີ ທີ່ອ່ານໜັງສືພິມ ຫຼື ວາລະສານ, ຟັງວິທະຍຸ ແລະ ເບິ່ງໂທລະພາບ ຢ່າງໜ້ອຍ 1 ຄັ້ງ ຕໍ່ ອາທິດ<br>ກ. ເພດຍິງ<br>ຂ. ເພດຊາຍ | **3.0**<br>**2.9** |
| **ການນໍາໃຊ້ຄອມພິວເຕີ** | | ອັດຕາສ່ວນຂອງປະຊາກອນ ອາຍຸ 15 ຫາ 24 ປີ ທີ່ນ□າໃຊ້ຄອມພິວເຕີໃນໄລຍະ 3 ເດືອນຜ່ານມາ<br>ກ. ເພດຍິງ<br>ຂ. ເພດຊາຍ | **10.7**<br>**12.3** |
| **ກໍາມະສິດໂທລະສັບມືຖື** | 5.b.1 | ອັດຕາສ່ວນຂອງປະຊາກອນ ອາຍຸ 15 ຫາ 24 ປີ ທີ່ຖືຄອງໂທລະສັບມືຖື<br>ກ. ເພດຍິງ<br>ຂ. ເພດຊາຍ | **75.9**<br>**74.8** |
| **ການນໍາໃຊ້ໂທລະສັບມືຖື** | | ອັດຕາສ່ວນຂອງປະຊາກອນ ອາຍຸ 15 ຫາ 24 ປີ ທີ່ນ□າໃຊ້ໂທລະສັບມືຖືໃນໄລຍະ 3 ເດືອນຜ່ານມາ<br>ກ. ເພດຍິງ<br>ຂ. ເພດຊາຍ | **80.2**<br>**83.0** |
| **ການນໍາໃຊ້ອິນເຕີເນັດ (ໃນໄລຍະ 3 ເດືອນຜ່ານມາ)** | 17.8.1 | ອັດຕາສ່ວນຂອງປະຊາກອນ ອາຍຸ 15 ຫາ 24 ປີ ທີ່ນ□າໃຊ້ອິນເຕີເນັດໃນໄລຍະ 3 ເດືອນຜ່ານມາ | |

| ຕາຕະລາງສະຫຼຸບຫຍໍ້ຜົນຂອງການວິໄຈສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວຂອງໄວໜຸ່ມ ໃນ ສປປ ລາວ | | | |
|---|---|---|---|
| **ຕົວຊີ້ບອກ** | **SDG** | **ນິຍາມ** | **ຜົນໄດ້ຮັບ** |
| | | ກ. ເພດຍິງ<br>ຂ. ເພດຊາຍ | **43.6**<br>**41.0** |
| **ການນຳໃຊ້ອິນເຕີເນັດ (ຢ່າງໜ້ອຍ 1 ຄັ້ງຕໍ່ອາທິດ ໃນໄລຍະ 3 ເດືອນຜ່ານມາ)** | | ອັດຕາສ່ວນຂອງປະຊາກອນ ອາຍຸ 15 ຫາ 24 ປີ ທີ່ນ□າໃຊ້ອິນເຕີເນັດ ຢ່າງໜ້ອຍ 1 ຄັ້ງ ຕໍ່ ອາທິດ ໃນໄລຍະ 3 ເດືອນຜ່ານມາ<br>ກ. ເພດຍິງ<br>ຂ. ເພດຊາຍ | **41.6**<br>**37.9** |
| **ການແຕ່ງງານກ່ອນໄວ (ກ່ອນ 15 ປີ)** | 5.3.1 | ສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 20-24 ປີທີ່ແຕ່ງງານຄັ້ງທຳອິດ ຫຼື ຢູ່ຮ່ວມກັນກ່ອນອາຍຸ 15 ປີ<br>ກ. ເພດຍິງ<br>ຂ. ເພດຊາຍ | **7.1**<br>**1.8** |
| **ການແຕ່ງງານໄວ (ກ່ອນອາຍຸ 18ປີ)** | 5.3.1 | ສ່ວນຮ້ອຍຂອງໄວໜຸ່ມ ອາຍຸ 20-24 ປີທີ່ແຕ່ງງານຄັ້ງທຳອິດ ຫຼື ຢູ່ຮ່ວມກັນກ່ອນອາຍຸ 18 ປີ<br>ກ. ເພດຍິງ<br>ຂ. ເພດຊາຍ | **32.7**<br>**10.8** |
| **ໄວໜຸ່ມອາຍຸ 15-19 ທີ່ປະຈຸບັນໄດ້ແຕ່ງງານ ຫຼື ຢູ່ຮ່ວມກັນແລ້ວ** | | ສ່ວນຮ້ອຍຂອງໄວໜຸ່ມອາຍຸ15-24 ທີ່ແຕ່ງງານຫຼາຍຄັ້ງ ຫຼື ຢູ່ຮ່ວມກັນ<br>ກ. ເພດຍິງ<br>ຂ. ເພດຊາຍ | **23.5**<br>**5.9** |
| **ການມີຫຼາຍຄູ່ສົມລົດໃນເວລາດຽວກັນ** | | ສ່ວນຮ້ອຍຂອງປະຊາກອນອາຍຸ 15-24 ປີທີ່ມີຫຼາຍຄູ່ສົມລົດໃນເວລາດຽວກັນ<br>ກ. ເພດຍິງ<br>ຂ. ເພດຊາຍ | **2.8**<br>**2.0** |

| ຕາຕະລາງສະຫຼຸບຫຍໍ້ຜົນຂອງການວິໄຈສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວຂອງໄວໜຸ່ມ  ໃນ ສປປ ລາວ | | | |
|---|---|---|---|
| **ຕົວຊີ້ບອກ** | **SDG** | **ນິຍາມ** | **ຜົນໄດ້ຮັບ** |
| **ຄວາມແຕກຕ່າງລະຫວ່າງ ອາຍຸຜົວ-ເມຍ** | | ສ່ວນຮ້ອຍຂອງຜູ້ຍິງທີ່ແຕ່ງງານ ຫຼື ຢູ່ຮ່ວມກັນກັບຜູ້ຊາຍທີ່ອາຍຸແກ່ກວ່າຕົນ 10 ປີ ຫຼື ຫຼາຍກວ່ານັ້ນ,<br>ກ. ໃນບັນດາຜູ້ຍິງອາຍຸ 15-19 ປີ,<br>ຂ. ໃນບັນດາຜູ້ຍິງອາຍຸ 20-24 ປີ | **11.3**<br>**9.8** |
| **ທັດສະນະຄະຕິຕໍ່ການໃຊ້ຄວາມຮຸນແຮງ ໃນຄອບຄົວ** | | ສ່ວນຮ້ອຍຂອງປະຊາກອນອາຍຸ15-24 ປີທີ່ຍອມຮັບພຶດຕິກຳຂອງຜົວວ່າຖືກຕ້ອງ ໃນການທຸບຕີເມຍໃນສະພາບການຕ່າງໆເຊັ່ນ: (1) ຖ້າເມຍອອກເຮືອນໂດຍບໍ່ບອກຜົວ, (2) ເມຍບໍ່ເອົາໃຈໃສ່ລູກ, (3) ເມຍຖຽງຜົວ, (4) ມຍບໍ່ຍອມຮ່ວມເພດນຳຜົວ, (5) ເມຍເຮັດອາຫານໄໝ້<br>ກ. ເພດຍິງ<br>ຂ. ເພດຊາຍ | **31.4**<br>**16.9** |

# ພາກທີ 1: ພາກສະເໜີ

## 1.1 ຄວາມເປັນມາ ແລະ ຄວາມສຳຄັນ

ຜົນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ປີ 2015 ສະແດງໃຫ້ເຫັນວ່າ ສປປ ລາວ ມີພົນລະເມືອງໜຸ່ມ ທີ່ມີອາຍຸຕໍ່າກວ່າ 25 ປີ ກວມເອົາ 60 ສ່ວນຮ້ອຍ ຂອງພົນລະເມືອງລາວທັງໝົດ ແລະ ຫຼາຍກວ່າ 20 ສ່ວນຮ້ອຍ ຂອງພົນລະເມືອງລາວ ແມ່ນມີເກນອາຍຸລະຫວ່າງ 15 ຫາ 24 ປີ. ໄວໜຸ່ມແມ່ນກຳລັງແຮງງານທີ່ສຳຄັນຂອງຊາດ ທີ່ປະກອບສ່ວນພັດທະນາປະເທດຊາດ ໃນປະຈຸບັນ ແລະ ອະນາຄົດ. ສະນັ້ນ, ບັນຫາເລື່ອງສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວ ແມ່ນໜຶ່ງໃນຕົວຊີ້ບອກທີ່ກ່ຽວພັນດ້ານປະຊາກອນທີ່ມີຜົນ ຕໍ່ກັບໂຄງປະກອບຂອງປະຊາກອນ, ດ້ານສຸຂະພາບຂອງໄວໜຸ່ມ ໃນການພັດທະນາພົນລະເມືອງໜຸ່ມໃຫ້ກາຍເປັນຊັບພະຍາກອນທີ່ມີປະສິດຕິພາບ ແລະ ກໍ່ໃຫ້ເກີດມີການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ ຂອງຊາດອີກດ້ວຍ.

ເຖິງວ່າສະຖານະພາບ ທາງດ້ານສຸຂະພາບຈະເລີນພັນຂອງແມ່ຍິງ ແລະ ເດັກນ້ອຍ ໄດ້ປັບປຸງດີຂຶ້ນ, ແຕ່ຍັງມີບາງກຸ່ມຊົນເຜົ່າ ທີ່ອາໄສຢູ່ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ແມ່ນຍັງຕໍ່າຫຼາຍ. ສປປ ລາວ ແມ່ນປະເທດໜຶ່ງໃນຂົງເຂດອານຸພາກພື້ນແມ່ນໍ້າຂອງຕອນລຸ່ມ ທີ່ມີອັດຕາການເສຍຊີວິດຂອງແມ່ສູງ ໃນເຂດຊົນນະບົດ, ແມ່ຍິງໃນໄວໜຸ່ມຍັງມີການເກີດລູກຖີ່, ມີການແຕ່ງງານໄວ, ມີລູກແຕ່ອາຍຸຍັງນ້ອຍ ແລະ ມີອັດຕາການຈະເລີນພັນສູງ ເມື່ອທຽບກັບຜູ້ທີ່ອາໄສຢູ່ເຂດຕົວເມືອງ. ອັດຕາການຈະເລີນພັນລວມ ຂອງ ສປປ ລາວ ແມ່ນມີແນວໂນ້ມຫຼຸດລົງ ຈາກ 3.4 ຄົນ ໃນ ປີ 2012 ມາເປັນ 2.7 ຄົນ ໃນປີ 2016. ເຖິງຢ່າງໃດກໍ່ຕາມ ອັດຕາການຈະເລີນພັນລວມຂອງ ສປປ ລາວ ຍັງມີອັດຕາສ່ວນທີ່ສູງເມື່ອທຽບໃສ່ກັບບັນດາປະເທດອາຊຽນ ຄື: ກຳປູເຈຍ (2.4), ມາເລເຊຍ (1.9), ມຽນມາ (2.2) ແລະ ຫວຽດນາມ (2.1)[1]. ອັດຕາການເກີດລູກຂອງໄວໜຸ່ມຂອງ ສປປ ລາວ ແມ່ນສູງກວ່າໝູ່ ໃນບັນດາ ປະເທດ ສະມາຊິກ ອາຊຽນ ເຊິ່ງເທົ່າ ກັບ 83 ຄົນ ຕໍ່ແມ່ນຍິງທີ່ມີອາຍຸ 15-19 ປີ 1000 ຄົນ ໃນປີ 2017[2].

ໄວໜຸ່ມຍິງທີ່ເປັນແມ່ໃນໄວ ອາຍຸ 15-19 ປີ ແມ່ນເປັນໄວມີອັດຕາຄວາມສ່ຽງຕໍ່ການຕາຍເພີ່ມຂຶ້ນ ແຕ່ 50-100 ສ່ວນຮ້ອຍ ພາຍໃນເດືອນ ທ□າອິດຂອງການເກີດລູກມີຊີວິດ ແລະ ອັດຕາເດັກເກີດໃຫມ່ແມ່ນຕິດເຊື້ອພະຍາດທີ່ສູງຂຶ້ນເມື່ອທຽບກັບເດັກທີ່ເກີດຈາກແມ່ຍິງຜູ້ໃຫຍ່[3]. ບັນຫາເລື່ອງການມີລູກກ່ອນໄວ ຫຼື ບໍ່ມີຄວາມພ້ອມຈະມີລູກ ຍ້ອນຂາດການວາງແຜນຄອບຄົວທີ່ດີ. ບັນຫາເຫຼົ່ານີ້ ຈະສົ່ງຜົນກະທົບຕໍ່ການສຶກສາ, ການຈ້າງງານ ແລະ ໂອກາດທາງເສດຖະກິດ, ບັນຫາສຸຂະພາບ, ຄວາມບໍ່ສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຄວາມທຸກຍາກ ຂອງຄອບຄົວ ແລະ ຊຸມຊົນຂອງພວກເຂົາອີກດ້ວຍ[4]. ດັ່ງນັ້ນ, ການປ້ອງກັນການຖືພາຂອງໄວໜຸ່ມກ່ອນໄວອັນຄວນທີ່ຈະເປັນແມ່ ແມ່ນວິທີການທີ່ສຳຄັນ ເພື່ອເຮັດໃຫ້ໄວໜຸ່ມມີສຸຂະພາບເຂັ້ມແຂງ ແລະ ມີຊີວິດການເປັນຢູ່ທີ່ດີຂຶ້ນ ພ້ອມນັ້ນ ຍັງຫຼຸດຜ່ອນຄວາມສ່ຽງຂອງໄວໜຸ່ມຕໍ່ການຕິດເຊື້ອທາງເພດສຳພັນ ແລະ ຄວາມຮຸນແຮງທາງເພດ.

---

[1] ປຶ້ມສະຖິຕິປະຈຳປີອາຊຽນ ປີ 2019

[2] ສະຖິຕິອັດຕາການເກີດລູກຂອງໄວໜຸ່ມ (WHO, 2020)

[3] ບົດຄົ້ນຄ້ວາອົງການອະນາໄມໂລກ (WHO, Geneva, 2008)

[4] ບົດລາຍງານ ການພັດທະນາຄົນລຸ້ນໃໝ່ ຂອງ ອົງການທະນາຄານໂລກ

ລັດຖະບານແຫ່ງ ສປປ ລາວ ໄດ້ວາງນະໂຍບາຍແຫ່ງຊາດ ວ່າດ້ວຍສຸຂະພາບຈະເລີນພັນຂອງແມ່-ເດັກເກີດໃໝ່ ແລະ ເດັກນ້ອຍ ປີ (2020-2030) ເພື່ອແນ່ໃສ່ໃຫ້ທຸກຄົນໂດຍບໍ່ຈຳແນກຊົນເຜົ່າ, ເພດ, ໄວ, ສະຖານະພາບທາງດ້ານຄອບຄົວ ແລະ ຄົນພິການ ຢູ່ໃນ ສປປ ລາວ. ໃຫ້ສາມາດໄດ້ມີສຸຂະພາບຈະເລີນພັນທີ່ດີ ຕາມມາດຕະຖານສາກົນ ເພື່ອໃຫ້ເຂົາເຈົ້າມີຄຸນຄ່າ ແລະ ເປັນພົນລະເມືອງມີສຸຂະພາບແຂງແຮງ ແລະ ມີປະສິດທິພາບ. ເຊິ່ງໄດ້ກຳນົດທັງໝົດມີ 5 ຂອບເຂດນະໂຍບາຍ ເຊິ່ງສອດຄ່ອງກັບການເບິ່ງແຍງສຸຂະພາບຄື: ສຸຂະພາບຈະເລີນພັນ, ສຸຂະພາບຂອງແມ່, ການວາງແຜນຄອບຄົວ, ສຸຂະພາບຂອງແມ່ ແລະ ໂພຊະນາການ, ສຸຂະພາບຂອງເດັກເກີດໃຫມ່ ແລະ ສຸຂະພາບຂອງໄວໜຸ່ມ.

## 1.2 ຈຸດປະສົງ

ການວິໄຈຂໍ້ມູນໃນຄັ້ງນີ້ ເພື່ອສຶກສາກ່ຽວກັບ ສະພາບຂອງໄວໜຸ່ມໃນ ສປປ ລາວ ທີ່ມີອາຍຸລະຫວ່າງ 15-24 ປີ ຢູ່ ສປປ ລາວ ທີ່ຕິດພັນກັບບັນຫາຕ່າງໆເຊັ່ນ: ສະພາບການຈະເລີນພັນການສຶກສາ, ການມີເພດສຳພັນ, ການຄຸມກຳເນີດ, ຄວາມຮູ້ກ່ຽວກັບໂລກເອດສ, ທັດສະນະການໃຊ້ຄວາມຮຸນແຮງໃນຄອບຄົວ, ການເຂົ້າເຖິງສື່ມວນຊົນ ແລະ ໄອຊີທີ ແລະ ການຊ່ວຍເຫຼືອທາງສັງຄົມ

## 1.3 ຂອບເຂດ ແລະ ວິທີວິທະຍາໃນການຄົ້ນຄວ້າ

ການສຶກສາຄັ້ງນີ້ ໄດ້ວາງຂອບເຂດການສຶກສາ ກ່ຽວກັບສະພາບຂອງໄວໜຸ່ມໃນ ສປປ ລາວ ທີ່ມີອາຍຸ 15-24 ປີ. ຊຶ່ງໄດ້ໃຊ້ວິທີການວິເຄາະແບບພັນລະນາ (Descritive Analysis) ເພື່ອອະທິບາຍ ກ່ຽວກັບໂຄງສ້າງ ດ້ານອາຍຸ, ເພດ, ດ້ານສຸຂະພາບ, ການສຶກສາ, ການມີເພດສຳພັນ, ການຈະເລີນພັນ, ການຕາຍ, ການຄຸມກຳເນີດ, ການວາງແຜນຄອບຄົວ, ທັດສະນະຕໍ່ກັບການໃຊ້ຄວາມຄວາມຮຸນແຮງ, ຄວາມຮູ້ກ່ຽວກັບພະຍາດເອດສ (HIV/AIDS) ແລະ ການແຕ່ງງານໃນກ່ອນໄວອາຍຸ. ຂໍ້ມູນທີ່ນ□າມາວິເຄາະໃນຄັ້ງນີ້ ແມ່ນອີງໃສ່ຂໍ້ມູນ ຈາກການສຳຫຼວດດັດສະນີໝາຍສັງຄົມລາວ ຄັ້ງທີ I ປີ 2011 (LSIS I, 2011) ແລະ ການສຳຫຼວດດັດສະນີໝາຍສັງຄົມລາວ ຄັ້ງທີ II ປີ 2017 (LSIS II, 2017).

## 1.4 ຂໍ້ຈຳກັດ

ການສຶກສາໃນຄັ້ງນີ້ຍັງມີ ຂໍ້ຈຳກັດສະແດງອອກດັ່ງນີ້:

- ການວິໄຈ ກ່ຽວກັບສະພາບຂອງໄວໜຸ່ມ ໃນ ສປປ ລາວ ໃນຄັ້ງນີ້ ໂດຍສ່ວນໃຫຍ່ແມ່ນອີງໃສ່ຖານຂໍ້ມູນ LSIS I, 2011 ແລະ LSIS II, 2017 ເທົ່ານັ້ນ, ຍັງບໍ່ທັນມີຂໍ້ມູນທີ່ຫຼາກຫຼາຍໂດຍສະເພາະຂໍ້ມູນການຈ້າງງານ ຂໍ້ມູນການຊ່ວຍເຫຼືອທາງສັງຄົມ ແລະ ຂໍ້ມູນປະກັນສັງຄົມ;
- ການວິໄຈລົງເລິກສະເພາະກ່ຽວກັບ ສະພາບຂອງໄວໜຸ່ມໃນ ສປປ ລາວ ແມ່ນຂ້ອນຂ້າງມີຄວາມຈຳກັດທາງດ້ານຂໍ້ມູນດັ່ງກ່າວມາຂ້າງເທິງ ໂດຍສະເພາະແມ່ນ ການຄົ້ນຄ້ວາລົງເລິກບັນຫາການສຶກສາ, ສຸຂະພາບຈະເລີນພັນ, ແລະ ການເຂົ້າເຖິງຂໍ້ມູນຂ່າວສານຂອງໄວໜຸ່ມ ໃນລະດັບບ້ານ ແລະ ລະດັບຄົວເຮືອນ. ສະນັ້ນ, ອາດຈະເຮັດໃຫ້ເນື້ອໃນ ແລະ ວິທີການໃນການວິໄຈໃນຄັ້ງນີ້ຈະຢູ່ໃນຂອບເຂດຈຳກັດ ອີງຕາມຂໍ້ມູນດ້ານສັງຄົມຕ່າງໆ ທີ່ໄດ້ຈາກການສຳຫຼວດ LSIS ໃນສອງຄັ້ງທີ່ຜ່ານມາ.

# ພາກທີ 2: ຄຸນລັກສະນະທາງດ້ານປະຊາກອນຂອງໄວໜຸ່ມ

## 2.1 ອາຍຸ ແລະ ເພດຂອງພົນລະເມືອງໜຸ່ມ

ຜົນການສໍາຫຼວດ LSIS I, 2011 ສະແດງໃຫ້ເຫັນເຖິງ ອັດຕາສ່ວນເພດຂອງພົນລະເມືອງໜຸ່ມທີ່ເປັນເພດຍິງມີຫຼາຍກວ່າ ເພດຊາຍເລັກນ້ອຍ ເຊິ່ງເຫັນວ່າ ພົນລະເມືອງໜຸ່ມໃນທຸກໆແມ່ຍິງ 100 ຄົນໃດ ຈະມີເພດຊາຍ 96 ຄົນ. ພົນລະເມືອງໜຸ່ມທີ່ມີອາຍຸລະຫວ່າງ 15-24 ປີ ມີ 17,235 ຄົນ ໃນນັ້ນ ມີເພດຊາຍ 8,437 ຄົນ ກວມເອົາ 49 ສ່ວນຮ້ອຍ, ມີແມ່ຍິງ 8,798 ຄົນ ກວມເອົາ 51 ສ່ວນຮ້ອຍ. ໃນທາງກົງກັນຂ້າມ ໃນການສໍາຫຼວດ LSIS II, 2017 ອັດຕາສ່ວນເພດຂອງພົນລະເມືອງໜຸ່ມຂອງ ສປປ ລາວ ຈໍານວນເພດຊາຍມີຫຼາຍກວ່າແມ່ຍິງເລັກນ້ອຍ ໃນພົນລະເມືອງໜຸ່ມ ທຸກໆແມ່ຍິງ 100 ຄົນໃດ ຈະມີເພດຊາຍ101 ຄົນ (ເບິ່ງຮູບສະແດງທີ 2.1). ພົນລະເມືອງໜຸ່ມທີ່ມີອາຍຸລະຫວ່າງ 15-24 ປີ ຈໍານວນທັງໝົດ 17,782 ຄົນ ເຊິ່ງໃນນີ້ ເພດຊາຍມີຈໍານວນ 8,920 ຄົນ ເທົ່າກັບ 50.2 ສ່ວນຮ້ອຍ, ມີແມ່ຍິງ 8,862 ຄົນ ກວມເອົາ 49.8 ສ່ວນຮ້ອຍ (ຕາຕະລາງ 2.1).

ຮູບສະແດງ 2.1. ສ່ວນຮ້ອຍ ແລະ ອັດຕາສ່ວນຂອງໄວໜຸ່ມ ອາຍຸ 15-24 ປີ ໃນປີ 2011 ແລະ 2017




ແຫຼ່ງຂໍ້ມູນ: LSIS I, 2011 ແລະ LSIS II, 2017

ຕາຕະລາງ 2.1 ຈຳນວນຕົວແທນຂອງການສຳຫຼວດ LSIS II, 2017

| | ຈຳນວນໄວໜຸ່ມ 15-24 ປີ | | | | |
|---|---|---|---|---|---|
| | ຍິງ | | ຊາຍ | | ລວມ |
| | ຈຳນວນ | ສ່ວນຮ້ອຍ | ຈຳນວນ | ສ່ວນຮ້ອຍ | ຈຳນວນ |
| **ລວມ** | **8,590** | **67** | **4,179** | **33** | **12,769** |
| **ເຂດທີ່ພັກອາໄສ** | | | | | |
| ຕົວເມືອງ | 2,598 | 30 | 1,248 | 30 | 3,846 |
| ຊົນນະບົດ | 5,991 | 70 | 2,931 | 70 | 8,922 |
| **ພາກ** | | | | | |
| ເໜືອ | 2,662 | 31 | 1,287 | 31 | 3,949 |
| ກາງ | 4,151 | 48 | 2,082 | 50 | 6,233 |
| ໃຕ້ | 1,777 | 21 | 810 | 19 | 2,587 |
| **ອາຍຸ** | | | | | |
| 15-24 | 8,590 | 40 | 2,405 | 22 | 10,995 |
| 15-19 | 4,565 | 21 | 1,571 | 15 | 6,136 |
| 15-17 | 2,796 | 13 | 835 | 8 | 3,631 |
| 18-19 | 1,769 | 8 | 1,773 | 16 | 3,542 |
| 20-24 | 4,024 | 19 | 4,179 | 39 | 8,203 |
| **ກຸ່ມພາສາປາກເວົ້າ** | | | | | |
| ລາວ-ໄຕ | 5,158 | 60 | 2,531 | 61 | 7,689 |
| ມອນ-ຂະແມ | 2,197 | 26 | 1,043 | 25 | 3,240 |
| ມົ້ງ-ມຽນ | 918 | 11 | 464 | 11 | 1,382 |
| ຈີນ-ຕີເບດ | 218 | 3 | 105 | 3 | 323 |
| ອື່ນໆ | 98 | 1 | 35 | 1 | 133 |

ແຫຼ່ງຂໍ້ມູນ: LSIS II, 2017

## 2.2 ການສຶກສາ ແລະ ການຮູ້ໜັງສື

ການສຶກສາແມ່ນຫົວໜ່ວຍພື້ນຖານຂອງມະນຸດ ແລະ ໃນຂະນະດຽວກັນລັດຖະບານຈະຕ້ອງໄດ້ມີການສົ່ງເສີມ ບັນດາແຜນງານຕ່າງໆກ່ຽວກັບ ການສຶກສາ ໂດຍສະເພາະແມ່ນຊັບພະຍາກອນໄວໜຸ່ມ ໃຫ້ກາຍເປັນໄວໜຸ່ມທີ່ຮູ້ໜັງສື. ການຮູ້ໜັງສື ໝາຍເຖິງ ຄວາມຮູ້ຄວາມສາມາດໃນການໄຈ້ແຍກ, ການຕີຄວາມໝາຍ, ການສື່ສານ ແລະ ເພື່ອສາມາດບັນລຸເປົ້າໝາຍຂອງເຂົາເຈົ້າ ແລະ ສາມາດເຂົ້າຮ່ວມໄດ້ທຸກພາລະກິດຢ່າງເຕັມເມັດ ຂອງຊຸມຊົນ ແລະ ສັງຄົມ. ການສຳຫຼວດ LSIS I ແລະ LSIS II ໄດ້ມີການເກັບກຳຂໍ້ມູນກ່ຽວກັບສະຖານະພາບການຮູ້ໜັງສືຂອງພົນລະເມືອງລາວ. ການເກັບກຳແມ່ນໄດ້ຖາມເຖິງສະມາຊິກໃນຄົວເຮືອນ ໂດຍສົມມຸດວ່າຜູ້ຕອບຄຳຖາມທີ່ຢູ່ຂັ້ນມັດທະຍົມ ຫຼື ຂັ້ນສູງສູງກວ່າສາມາດອ່ານ ແລະ ຜູ້ຕອບຄຳຖາມທີ່ມີການສຶກສາຂັ້ນປະຖົມ ຫຼື ຕໍ່າກວ່າ ສາມາດ

ອ່ານປະໂຫຍກສັ້ນ ແລະ ງ່າຍໄດ້. ຮູບສະແດງທີ່ 2.2 ສະແດງໃຫ້ເຫັນເຖິງອັດຕາການຮູ້ໜັງສືຂອງໄວໜຸ່ມ ອາຍຸ 15-24 ປີ, ອັດຕາການຮູ້ໜັງສືຂອງໄວໜຸ່ມຍິງແມ່ນ 76.5 ສ່ວນຮ້ອຍ ແລະ ໄວໜຸ່ມຊາຍແມ່ນ 84.6 ສ່ວນຮ້ອຍ.

ການຮູ້ໜັງສືຂອງແມ່ຍິງ ໂດຍລວມແລ້ວແມ່ນຢູ່ເຂດພາກກາງ ແມ່ນ 80.1 ສ່ວນຮ້ອຍ ແລະ ເພດຊາຍຢູ່ເຂດພາກເໜືອ ແມ່ນ 88.6 ສ່ວນຮ້ອຍ. ສ່ວນຮ້ອຍຂອງການຮູ້ໜັງສືຂອງຄົນໃນເຂດຕົວເມືອງສໍາລັບແມ່ຍິງແມ່ນ 93.2 ສ່ວນຮ້ອຍ ແລະ ສໍາລັບເພດຊາຍແມ່ນ 94.4 ສ່ວນຮ້ອຍ. ໃນຂະນະທີ່ຢູ່ໃນເຂດຊົນນະບົດການຮູ້ໜັງສືຂອງແມ່ຍິງ ແມ່ນ 69.3 ສ່ວນຮ້ອຍ ແລະ ເພດຊາຍແມ່ນ 80.5 ສ່ວນຮ້ອຍ.

ຮູບສະແດງ 2.2. ອັດຕາການຮູ້ໜັງສືຂອງໄວໜຸ່ມ ອາຍຸ 15-24 ແບ່ງຕາມ ເພດ, ເຂດທີ່ພັກອາໄສ ແລະ ພາກ




ແຫຼ່ງຂໍ້ມູນ: LSIS I, 2011 ແລະ LSIS II, 2017

*ຕາຕະລາງລະອຽດ ໃນເອກະສານຊ້ອນທ້າຍ, ຕາຕະລາງ 1 ແລະ 2*

ຮູບສະແດງ 2.3 ສະແດງໃຫ້ເຫັນອັດຕາການຮູ້ໜັງສືຂອງໄວໜຸ່ມຍິງ ອາຍຸ 15-24 ປີ ປຽບທຽບລະຫວ່າງສອງການສໍາຫຼວດ LSIS I ແລະ LSIS II ຊຶ່ງເຫັນໄດ້ວ່າມີອັດຕາສ່ວນການຮູ້ໜັງສືຂອງໄວໜຸ່ມຍິງໃນທຸກໆແຂວງມີສັດສ່ວນທີ່ສູງຂຶ້ນເຊັ່ນວ່າ ອັດຕາສ່ວນການຮູ້ໜັງສືຂອງໄວໜຸ່ມຍິງ ແຂວງ ອຸດົມໄຊ 50.6 ສ່ວນຮ້ອຍ ໃນປີ 2011 ມາເປັນ 75.8 ສ່ວນຮ້ອຍ ໃນປີ 2017 ເຊັ່ນດຽວກັບ ແຂວງຫຼວງນ□ໍທາ ໃນປີ 2011 ມີ 57.5 ສ່ວນຮ້ອຍ ເພີ່ມຂຶ້ນເປັນ 73.3 ສ່ວນຮ້ອຍໃນປີ 2017 ແລະ ແຂວງອື່ນໆກໍ່ເຊັ່ນດຽວກັນ. ໃນຂະນະດຽວກັນ ອັດຕາການຮູ້ໜັງສືຂອງໄວໜຸ່ມຊາຍອາຍຸ 15-24 ປີ ປຽບທຽບລະຫວ່າງສອງການສໍາຫຼວດ LSIS I ແລະ LSIS II ກໍ່ເຫັນໄດ້ວ່າມີອັດຕາສ່ວນທີ່ສູງຂຶ້ນເຊັ່ນກັນ (ເບິ່ງຮູບສະແດງ 2.4)

ຮູບສະແດງ 2.3. ອັດຕາການຮູ້ໜັງສືຂອງໄວໜຸ່ມຍິງ ອາຍຸ 15-24 ປີ ທຽບ ການສໍາຫຼວດ LSIS I, 2011 ແລະ LSIS II, 2017




ແຫຼ່ງຂໍ້ມູນ: LSIS I, 2011

ແຫຼ່ງຂໍ້ມູນ: LSIS II, 2017

ຮູບສະແດງ 2.4. ອັດຕາການຮູ້ໜັງສືຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ທຽບ ການສ□ຫຼວດ LSIS  I, 2011 ແລະ LSIS II, 2017

2011 2017




ແຫຼ່ງຂໍ້ມູນ: LSIS I, 2011 ແຫຼ່ງຂໍ້ມູນ: LSIS II, 2017

# ພາກທີ 3: ການຈະເລີນພັນ ແລະ ສຸຂະພາບຂອງແມ່

## 3.1 ອັດຕາການຈະເລີນພັນຂອງໄວໜຸ່ມ

ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ສຸຂະພາບຈະເລີນພັນ ແລະ ສຸຂະພາບຂອງແມ່ ຂອງໄວໜຸ່ມ ແມ່ນມີຄວາມສໍາຄັນຫຼາຍຕໍ່ການເບິ່ງແຍງດູແລ ແລະ ເອົາໃຈໃສ່ຈາກຊຸມຊົນ, ຄອບຄົວ, ບຸກຄະລາກອນທີ່ມີຄວາມຊໍານານ ແລະ ຈັດຫາສິ່ງທີ່ອໍານວຍຄວາມສະດວກທີ່ພຽງພໍໃນຂົງເຂດສາທາລະນະສຸກ.

ຕາຕະລາງ 3.1. ອັດຕາການຈະເລີນພັນຂອງໄວໜຸ່ມ

| | 2011 | | | 2017 | | |
|---|---|---|---|---|---|---|
| | ຕົວເມືອງ | ຊົນນະບົດ | ລວມ | ຕົວເມືອງ | ຊົນນະບົດ | ລວມ |
| **ອາຍຸ** | | | | | | |
| 15-19 | 44 | 114 | 94 | 42 | 101 | 83 |
| 20-24 | 125 | 213 | 185 | 102 | 193 | 162 |
| 25-29 | 126 | 170 | 157 | 144 | 156 | 150 |
| 30-34 | 92 | 109 | 104 | 87 | 93 | 91 |
| 35-39 | 36 | 70 | 60 | 41 | 47 | 45 |
| 40-44 | 13 | 28 | 23 | 10 | 16 | 14 |
| 45-49 | 4 | 12 | 10 | 1 | 7 | 5 |
| TFR (15-49) | 2.2 | 3.6 | 3.2 | 2.1 | 3 | 2.7 |
| GFR | 78 | 125 | 111 | 70 | 101 | 90 |
| CBR8 | 20 | 26 | 25 | 18 | 23 | 22 |

ແຫຼ່ງຂໍ້ມູນ: LSIS I, 2011 ແລະ LSIS II, 2017

ຕາຕະລາງ 3.1. ສະແດງໃຫ້ເຫັນວ່າ ອັດຕາການຈະເລີນພັນລວມ (TFR) ຂອງແມ່ຍິງໃນໝວດອາຍຸ 15-49 ປີ. ອັດຕາການຈະເລີນພັນລວມ (TFR) ແມ່ນ 2.7. ແມ່ຍິງໃນເຂດຊົນນະບົດແມ່ນມີອັດຕາການຈະເລີນພັນ 3.0, ໃນຂະນະທີ່ເຂດຕົວເມືອງແມ່ນ 2.1. ເມື່ອທຽບໃສ່ການສໍາຫຼວດ LSIS I, 2011, ອັດຕາການຈະເລີນພັນ (TFR) ຫຼຸດລົງ 0.5 (ຈາກ 3.2 ໃນປີ 2011 ມາເປັນ 2.7 ໃນປີ 2017), ໃນຂະນະທີ່ເຂດຊົນນະບົດ ແລະ ເຂດຕົວເມືອງ ຫຼຸດລົງ 0.6 ແລະ 0.1 ຕາມລໍາດັບ. ໃນໄລຍະການສໍາຫຼວດ LSIS II, 2017, ອັດຕາການຈະເລີນພັນແບ່ງຕາມໝວດອາຍຸຂອງຜູ້ຍິງ 15-49 ປີ ຢູ່ໃນເຂດຊົນນະບົດ ແມ່ນມີອັດຕາຈະເລີນພັນສູງສຸດ ຢູ່ທີ່ໝວດອາຍຸ 20-24 ປີ, ໃນຂະນະດຽວກັນ ໃນເຂດຕົວເມືອງ ແມ່ນໝວດອາຍຸ 25-29 ປີ.

## 3.2 ການເກີດລູກກ່ອນໄວ

ໃນ ສປປ ລາວ ການເກີດລູກກ່ອນໄວ ຂອງແມ່ຍິງລາວ ແມ່ນມີອັດຕາສ່ວນສູງ ຄືປະມານ 13.4 ສ່ວນຮ້ອຍ ຂອງແມ່ຍິງອາຍຸ 15-19 ປີທີ່ໄດ້ເກີດລູກມີຊີວິດໜຶ່ງຄົນ, ກໍາລັງຖືພາລູກຜູ້ທໍາອິດຢູ່ ປະມານ 3.3 ສ່ວນຮ້ອຍ. ຍິ່ງໄປກວ່ານັ້ນ ແມ່ຍິງທີ່ໄດ້ເກີດລູກມີຊີວິດໜຶ່ງຄົນກ່ອນອາຍຸ 15 ປີ ແມ່ນມີສູງເຖິງ 1.8 ສ່ວນຮ້ອຍ.

ແມ່ຍິງຢູ່ໃນເຂດຊົນນະບົດ ແມ່ນມີອັດຕາການເກີດລູກກ່ອນໄວສູງກວ່າເຂດຕົວເມືອງ (ຊົນນະບົດ 16.2 ສ່ວນຮ້ອຍ ແລະ ຕົວເມືອງ 6.4 ສ່ວນຮ້ອຍຂອງແມ່ຍິງອາຍຸ 15-19 ປີ ໄດ້ເກີດລູກມີຊີວິດໜຶ່ງຄົນ). ແມ່ຍິງທີ່ເກີດລູກກ່ອນໄວສູງກວ່າໝູ່ແມ່ນພົບເຫັນຢູ່ເຂດພາກເໜືອ (ພາກເໜືອ 18.0 ສ່ວນຮ້ອຍ, ພາກກາງ 11.1 ສ່ວນຮ້ອຍ ແລະ ພາກໃຕ້ 12.3 ສ່ວນຮ້ອຍ) ຕາມລຳດັບ ແລະ ແຂວງ ທີ່ມີອັດຕາການເກີດລູກກ່ອນໄວອາຍຸສູງກວ່າໝູ່ແມ່ນແຂວງຫົວພັນ, ຮອງລົງມາ ແມ່ນແຂວງບໍ່ແກ້ວ ແລະ ຕາມດ້ວຍແຂວງໄຊສົມບູນ (24.2 ສ່ວນຮ້ອຍ; 24.1 ສ່ວນຮ້ອຍ ແລະ 20.7 ສ່ວນຮ້ອຍ). ແມ່ຍິງໃນກຸ່ມພາສາທີ່ ມົ້ງ-ມຽນ ແມ່ນມີອັດຕາການເກີດລູກກ່ອນໄວ ແລະ ຮອງລົງມາແມ່ນ ກຸ່ມພາສາ ມອນ-ຂະແມ (28.0 ສ່ວນຮ້ອຍ ແລະ 16.5 ສ່ວນຮ້ອຍ). ໃນນັ້ນກຸ່ມຄົນທີ່ທຸກຍາກສຸດແມ່ນມີອັດຕາສ່ວນສູງສຸດ ແລະ ກຸ່ມຄົນທີ່ຮັ່ງມີທີ່ສຸດແມ່ນມີອັດຕາສ່ວນຕ່ຳສຸດ (25.8 ສ່ວນຮ້ອຍ ແລະ 3.1 ສ່ວນຮ້ອຍ) (ເບິ່ງຕາຕະລາງ 3).

ແມ່ຍິງລາວ ອາຍຸ 20-24 ປີ ແມ່ນມີການເກີດລູກກ່ອນໄວ ກວມອັດຕາສ່ວນສູງ ເຊັ່ນດຽວກັບແມ່ຍິງລາວອາຍຸ 15-19 ປີ ຄືປະມານ 53.4 ສ່ວນຮ້ອຍ ແມ່ນໄດ້ເກີດລູດມີຊີວິດໜຶ່ງຄົນ, ກຳລັງຖືພາລູກຜູ້ທຳອິດຢູ່ ປະມານ 3.7 ສ່ວນຮ້ອຍ. ຍິ່ງໄປກວ່ານັ້ນ ແມ່ຍິງທີ່ໄດ້ເກີດລູກມີຊີວິດໜຶ່ງຄົນ ກ່ອນອາຍຸ 18 ປີ ແມ່ນມີສູງເຖິງ 18.4 ສ່ວນຮ້ອຍ. ແມ່ຍິງຢູ່ໃນເຂດຊົນນະບົດ ແມ່ນມີອັດຕາການເກີດລູກກ່ອນໄວສູງກວ່າເຂດຕົວເມືອງ (ຊົນນະບົດ 61.7 ສ່ວນຮ້ອຍ ແລະ ຕົວເມືອງ 36.1 ສ່ວນຮ້ອຍຂອງແມ່ຍິງອາຍຸ 20-24 ປີ ໄດ້ເກີດລູກມີຊີວິດໜຶ່ງຄົນ). ແມ່ຍິງທີ່ມີອັດຕາການເກີດລູກກ່ອນໄວສູງແມ່ນພົບເຫັນຢູ່ເຂດພາກເໜືອ (ພາກເໜືອ 69.9 ສ່ວນຮ້ອຍ, ພາກກາງ 46.9 ສ່ວນຮ້ອຍ ແລະ ພາກໃຕ້ 54.1 ສ່ວນຮ້ອຍ) ແລະ ແຂວງທີ່ມີອັດຕາສ່ວນສູງກວ່າໝູ່ ແມ່ນແຂວງຫົວພັນ, ຮອງລົງມາແມ່ນແຂວງຜົ້ງສາລີ ແລະ ຕາມດ້ວຍແຂວງໄຊສົມບູນ ( 67.3 ສ່ວນຮ້ອຍ; 67.9 ສ່ວນຮ້ອຍ ແລະ 66.7 ສ່ວນຮ້ອຍ). ແມ່ຍິງໃນກຸ່ມພາສາທີ່ເວົ້າພາສາ ມົ້ງ-ມຽນ ແມ່ນມີອັດຕາການເກີດລູກກ່ອນໄວ ແລະ ຮອງລົງມາແມ່ນ ກຸ່ມພາສາ ຈີນ-ຕິເບດ ( 77.4 ສ່ວນຮ້ອຍ ແລະ 67.9 ສ່ວນຮ້ອຍ). ໃນນັ້ນກຸ່ມຄົນທີ່ທຸກຍາກສຸດແມ່ນມີອັດຕາສ່ວນສູງສຸດ ແລະ ກຸ່ມຄົນທີ່ຮັ່ງມີທີ່ສຸດແມ່ນມີອັດຕາສ່ວນຕ່ຳສຸດ ( 77.0 ສ່ວນຮ້ອຍ ແລະ 28.4 ສ່ວນຮ້ອຍ) (ເບິ່ງຕາຕະລາງ 3.2).

ຕາຕະລາງ 3.2. ການເກີດລູກກ່ອນໄວ ຂອງໄວໜຸ່ມຍິງ ອາຍຸ 15-24 ປີ ແບ່ງຕາມ ເຂດທີ່ພັກອາໄສ, ພາກ, ແຂວງ, ລະດັບການສຶກສາ, ກຸ່ມພາສາປາກເວົ້າ ແລະ ດັດຊະນີຄວາມຢູ່ດີກິນດີ

| | **ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-19 ປີ** | | | **ຈຳນວນ ແມ່ຍິງ ອາຍຸ 15-19 ປີ** | **ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸ 20-24 ປີ** | | | **ຈຳນວນ ແມ່ຍິງ ອາຍຸ 20-24 ປີ** |
|---|---|---|---|---|---|---|---|---|
| | **ໄດ້ເກີດລູກມີຊີວິດໜຶ່ງຄົນ** | **ກຳລັງຖືພາຜູ້ທຳອິດ** | **ໄດ້ເກີດລູກມີຊີວິດໜຶ່ງຄົນກ່ອນ ອາຍຸ 15 ປີ** | | **ໄດ້ເກີດລູກມີຊີວິດໜຶ່ງຄົນ** | **ກຳລັງຖືພາຜູ້ທຳອິດ** | **ໄດ້ເກີດລູກມີຊີວິດໜຶ່ງຄົນກ່ອນ ອາຍຸ 18 ປີ** | |
| **ລວມ** | **13.4** | **3.3** | **1.8** | **4,565** | **53.4** | **3.7** | **18.4** | **4,024** |
| **ເຂດທີ່ພັກອາໄສ** | | | | | | | | |
| ຕົວເມືອງ | 6.4 | 1.8 | 0.7 | 1,282 | 36.1 | 3.8 | 10.1 | 1,316 |
| ຊົນນະບົດ | 16.2 | 3.8 | 2.3 | 3,283 | 61.7 | 3.7 | 22.5 | 2,708 |
| **ພາກ** | | | | | | | | |
| ເໜືອ | 18.0 | 2.6 | 2.6 | 1,383 | 62.9 | 3.1 | 23.9 | 1,279 |
| ກາງ | 11.1 | 3.8 | 1.7 | 2,161 | 46.9 | 3.7 | 15.5 | 1,990 |
| ໃຕ້ | 12.3 | 3.0 | 1.0 | 1,021 | 54.1 | 4.9 | 16.8 | 756 |
| **ແຂວງ** | | | | | | | | |
| ນະຄອນຫຼວງວຽງຈັນ | 6.3 | 0.7 | 0.5 | 460 | 29.3 | 4.1 | 5.1 | 533 |
| ຜົ້ງສາລີ | 18.5 | 3.3 | 0.4 | 116 | 67.9 | 2.8 | 23.9 | 109 |
| ຫຼວງນໍ້າທາ | 13.3 | 2.8 | 1.9 | 123 | 66.4 | 4.1 | 26.2 | 122 |
| ອຸດົມໄຊ | 15.5 | 5.1 | 1.8 | 280 | 55.7 | 2.7 | 18.8 | 255 |
| ບໍ່ແກ້ວ | 24.1 | 3.0 | 6.5 | 129 | 64.7 | 3.4 | 26.1 | 119 |
| ຫຼວງພະບາງ | 17.8 | 1.4 | 1.6 | 310 | 61.7 | 3.0 | 22.7 | 264 |
| ຫົວພັນ | 24.2 | 1.9 | 4.9 | 199 | 69.3 | 3.1 | 35.4 | 192 |
| ໄຊຍະບູລີ | 14.6 | 0.9 | 2.2 | 227 | 61.5 | 2.8 | 18.8 | 218 |
| ຊຽງຂວາງ | 14.6 | 6.3 | 1.0 | 205 | 59.4 | 2.7 | 24.1 | 187 |
| ວຽງຈັນ | 11.0 | 5.3 | 0.8 | 281 | 60.0 | 4.7 | 20.4 | 275 |
| ບໍລິຄຳໄຊ | 12.6 | 4.6 | 0.7 | 237 | 56.7 | 2.4 | 17.1 | 164 |

| | ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-19 ປີ | | | ຈຳນວນ ແມ່ຍິງ ອາຍຸ 15-19 ປີ | ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸ 20-24 ປີ | | | ຈຳນວນ ແມ່ຍິງ ອາຍຸ 20-24 ປີ |
|---|---|---|---|---|---|---|---|---|
| | ໄດ້ເກີດລູກມີຊີວິດ ໜຶ່ງຄົນ | ກຳລັງຖືພາຜູ້ທຳອິດ | ໄດ້ເກີດລູກມີຊີວິດໜຶ່ງຄົນ ກ່ອນ ອາຍຸ 15 ປີ | | ໄດ້ເກີດລູກມີຊີວິດໜຶ່ງຄົນ | ກຳລັງຖືພາຜູ້ທຳອິດ | ໄດ້ເກີດລູກມີຊີວິດໜຶ່ງຄົນ ກ່ອນ ອາຍຸ 18 ປີ | |
| ຄຳມ່ວນ | 11.1 | 3.8 | 2.1 | 264 | 49.1 | 5.3 | 13.2 | 228 |
| ສະຫວັນນະເຂດ | 11.6 | 4.1 | 3.1 | 637 | 47.0 | 1.9 | 18.9 | 530 |
| ສາລະວັນ | 15.7 | 1.8 | 1.9 | 318 | 57.6 | 4.6 | 20.2 | 238 |
| ເຊກອງ | 16.1 | 3.3 | 1.9 | 86 | 59.0 | 3.8 | 24.4 | 78 |
| ຈຳປາສັກ | 9.8 | 3.4 | 0.4 | 503 | 48.9 | 5.4 | 12.2 | 3352 |
| ອັດຕະປື | 10.4 | 4.9 | 0.7 | 114 | 61.4 | 4.5 | 19.3 | 88 |
| ໄຊສົມບູນ | 20.7 | 4.9 | 3.3 | 77 | 66.7 | 6.9 | 31.9 | 72 |
| **ລະດັບການສຶກສາ** | | | | | | | | |
| ບໍ່ມີການສຶກສາ | 34.0 | 4.6 | 8.1 | 302 | 77.6 | 1.2 | 42.9 | 410 |
| ຊັ້ນປະຖົມ | 26.8 | 6.0 | 4.0 | 911 | 72.4 | 3.6 | 27.3 | 1,209 |
| ຊັ້ນມັດທະຍົມຕົ້ນ | 15.2 | 4.0 | 1.5 | 1,479 | 69.0 | 3.3 | 22.1 | 886 |
| ຊັ້ນມັດທະຍົມປາຍ | 2.4 | 1.0 | 0.0 | 1,650 | 38.1 | 6.1 | 6.4 | 611 |
| ວິຊາຊີບ/ຊັ້ນກາງ | (0.0) | (2.3) | (0.0) | 39 | 19.1 | 7.4 | 0.0 | 136 |
| ຊັ້ນສູງຂຶ້ນໄປ | 0.0 | 1.3 | 0.0 | 185 | 10.9 | 3.1 | 0.1 | 772 |
| **ກຸ່ມພາສາປາກເວົ້າ** | | | | | | | | |
| ລາວ-ໄຕ | 9.1 | 2.1 | 1.0 | 2,671 | 45.7 | 4.1 | 12.1 | 2,487 |
| ມອນ-ຂະແມ | 16.5 | 4.9 | 3.0 | 1,220 | 61.5 | 3.6 | 24.7 | 977 |
| ມົ້ງ-ມຽນ | 28.0 | 5.1 | 3.3 | 517 | 77.4 | 1.7 | 41.3 | 402 |
| ຈີນ-ຕິເບດ | 16.0 | 3.8 | 2.0 | 109 | 67.9 | 2.8 | 24.8 | 109 |
| ອື່ນໆ | (9.6) | (2.0) | (2.9) | 49 | 53.1 | 4.1 | 14.3 | 49 |

| | ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-19 ປີ | | | ຈຳນວນ ແມ່ຍິງ ອາຍຸ 15-19 ປີ | ອັດຕາສ່ວນຮ້ອຍຂອງແມ່ຍິງ ອາຍຸ 20-24 ປີ | | | ຈຳນວນ ແມ່ຍິງ ອາຍຸ 20-24 ປີ |
|---|---|---|---|---|---|---|---|---|
| | ໄດ້ເກີດລູກມີຊີວິດ ໜຶ່ງຄົນ | ກຳລັງຖືພາຜູ້ທຳອິດ | ໄດ້ເກີດລູກມີຊີວິດໜຶ່ງຄົນ ກ່ອນ ອາຍຸ 15 ປີ | | ໄດ້ເກີດລູກມີຊີວິດໜຶ່ງຄົນ | ກຳລັງຖືພາຜູ້ທຳອິດ | ໄດ້ເກີດລູກມີຊີວິດໜຶ່ງຄົນ ກ່ອນ ອາຍຸ 18 ປີ | |
| **ດັດຊະນີຄວາມຢູ່ດີກິນດີ** | | | | | | | | |
| ທຸກຍາກທີ່ສຸດ | 25.8 | 4.2 | 4.8 | 854 | 77.0 | 1.3 | 36.8 | 747 |
| ທຸກ | 16.5 | 4.3 | 2.1 | 1,022 | 67.3 | 2.8 | 24.0 | 780 |
| ປານກາງ | 12.6 | 3.6 | 1.3 | 951 | 54.1 | 5.9 | 17.8 | 774 |
| ຮັ່ງ | 8.6 | 3.2 | 0.7 | 901 | 45.2 | 4.3 | 12.5 | 831 |
| ຮັ່ງທີ່ສຸດ | 3.1 | 0.6 | 0.2 | 837 | 28.4 | 3.9 | 4.1 | 892 |

ແຫຼ່ງຂໍ້ມູນ: LSIS II, 2017

## 3.3 ການເປັນພໍ່ ກ່ອນໄວ

ໃນ ສປປ ລາວ ການເປັນພໍ່ກ່ອນໄວ (ໄວໜຸ່ມຊາຍອາຍຸ 15-19 ປີ) ແມ່ນມີອັດຕາສ່ວນບໍ່ສູງຫຼາຍຖ້າທຽບກັບແມ່ຍິງໃນໄວອາຍຸດຽວກັນ ປະມານ 2.7 ສ່ວນຮ້ອຍ (ແມ່ຍິງ 13.4 ສ່ວນຮ້ອຍ) ແມ່ນໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ ແລະ ໄດ້ເປັນພໍ່ຂອງເດັກເກີດລູກມີຊີວິດໜຶ່ງຄົນ ກ່ອນອາຍຸ 15 ປີ ແມ່ນມີປະມານ 0.3 ສ່ວນຮ້ອຍ. ໄວໜຸ່ມຊາຍຢູ່ໃນເຂດຊົນນະບົດ ແມ່ນມີອັດຕາການເປັນພໍ່ ກ່ອນກະສຽນສູງກວ່າໄວໜຸ່ມຢູ່ໃນເຂດຕົວເມືອງ (ຊົນນະບົດ 3.3 ສ່ວນຮ້ອຍ ແລະ ຕົວເມືອງ 1.1 ສ່ວນຮ້ອຍຂອງໄວໜຸ່ມຊາຍ ອາຍຸ 15-19 ປີ ທີ່ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ). ອັດຕາການເປັນພໍ່ ກ່ອນກະສຽນສູງກວ່າໝູ່ແມ່ນຢູ່ເຂດພາກເໜືອ (ພາກເໜືອ 4.3 ສ່ວນຮ້ອຍ, ພາກກາງ 1.9 ສ່ວນຮ້ອຍ ແລະ ພາກໃຕ້ 2.4 ສ່ວນຮ້ອຍ) ແລະ ແຂວງທີ່ມີອັດຕາສ່ວນສູງກວ່າໝູ່ແມ່ນແຂວງຫົວພັນ, ຮອງລົງມາແມ່ນແຂວງຜົ້ງສາລີ ແລະ ແຂວງບໍ່ແກ້ວ (8.7 ສ່ວນຮ້ອຍ; 5.4 ສ່ວນຮ້ອຍ ແລະ 5.4 ສ່ວນຮ້ອຍ). ການເປັນພໍ່ກ່ອນໄວ ໃນກຸ່ມພາສາ ຈີນ-ຕິເບດ ມີອັດຕາສ່ວນສູງກວ່າໝູ່ ແລະ ຮອງລົງມາແມ່ນ ກຸ່ມພາສາ ມົ້ງ-ມຽນ (8.0 ສ່ວນຮ້ອຍ ແລະ 7.9 ສ່ວນຮ້ອຍ). ໃນນັ້ນກຸ່ມຄົນທີ່ທຸກຍາກສຸດແມ່ນມີອັດຕາສ່ວນສູງສຸດ ແລະ ກຸ່ມຄົນທີ່ຮັ່ງມີທີ່ສຸດແມ່ນມີອັດຕາສ່ວນຕໍ່າສຸດ (6.4 ສ່ວນຮ້ອຍ ແລະ 0.7 ສ່ວນຮ້ອຍ) (ເບິ່ງຕາຕະລາງ 3.3).

ການເປັນພໍ່ກ່ອນໄວ (ໄວໜຸ່ມຊາຍອາຍຸ 20-24 ປີ) ແມ່ນມີອັດຕາສ່ວນສູງ ປະມານ 29.3 ສ່ວນຮ້ອຍແມ່ນໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ ແລະ ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ ກ່ອນອາຍຸ 18 ປີ ແມ່ນມີສູງເຖິງ 3.0 ສ່ວນຮ້ອຍ. ໄວໜຸ່ມຊາຍຢູ່ໃນເຂດຊົນນະບົດ ແມ່ນມີອັດຕາການເປັນພໍ່ ກ່ອນກະສຽນສູງກວ່າໄວໜຸ່ມຢູ່ໃນເຂດຕົວເມືອງ (ຊົນນະບົດ 35.2 ສ່ວນຮ້ອຍ ແລະ ຕົວເມືອງ 15.6 ສ່ວນຮ້ອຍຂອງໄວໜຸ່ມຊາຍ ອາຍຸ 20-24 ປີ ທີ່ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ). ຢູ່ເຂດພາກເໜືອ ມີອັດຕາການເປັນພໍ່ ກ່ອນກະສຽນສູງກວ່າໝູ່ (ພາກເໜືອ 35.7 ສ່ວນຮ້ອຍ, ພາກກາງ 24.7 ສ່ວນຮ້ອຍ ແລະ ພາກໃຕ້ 29.9 ສ່ວນຮ້ອຍ) ແລະ ແຂວງທີ່ມີອັດຕາສ່ວນສູງກວ່າໝູ່ແມ່ນແຂວງເຊກອງ, ຮອງລົງມາແມ່ນແຂວງສາລະວັນ ແລະ ແຂວງບໍ່ແກ້ວ (46.7 ສ່ວນຮ້ອຍ; 41.7 ສ່ວນຮ້ອຍ ແລະ 41.5 ສ່ວນຮ້ອຍ). ການເປັນພໍ່ກ່ອນໄວ ໃນກຸ່ມພາສາທີ່ເວົ້າພາສາ ມົ້ງ-ມຽນ ມີອັດຕາສ່ວນສູງກວ່າໝູ່ ແລະ ຮອງລົງມາແມ່ນ ກຸ່ມພາສາ ຈີນ-ຕິເບດ (52.4 ສ່ວນຮ້ອຍ ແລະ 50.0 ສ່ວນຮ້ອຍ). ໃນນັ້ນກຸ່ມຄົນທີ່ທຸກຍາກສຸດແມ່ນມີອັດຕາສ່ວນສູງສຸດ ແລະ ກຸ່ມຄົນທີ່ຮັ່ງມີທີ່ສຸດແມ່ນມີອັດຕາສ່ວນຕໍ່າສຸດ (47.0 ສ່ວນຮ້ອຍ ແລະ 14.9 ສ່ວນຮ້ອຍ) (ເບິ່ງຕາຕະລາງ 3.3).

ຕາຕະລາງ 3.3. ການເປັນພໍ່ກ່ອນໄວອາຍຸ ຂອງໄວໜຸ່ມຊາຍ ອາຍຸ 15-24 ປີ ແບ່ງຕາມ ເຂດທີ່ພັກອາໄສ, ພາກ, ແຂວງ, ລະດັບການສຶກສາ, ກຸ່ມພາສາປາກເວົ້າ ແລະ ດັດຊະນີຄວາມຢູ່ດີກິນດີ

| | ອັດຕາສ່ວນຮ້ອຍຂອງຜູ້ຊາຍ ອາຍຸ 15-19 ປີ | | ຈຳນວນ ຜູ້ຊາຍ ອາຍຸ 15-19 ປີ | ອັດຕາສ່ວນຮ້ອຍຂອງ ຜູ້ຊາຍ ອາຍຸ 20-24 ປີ | | ຈຳນວນ ຜູ້ຊາຍ ອາຍຸ 20-24 ປີ |
|---|---|---|---|---|---|---|
| | ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ | ໄດ້ເປັນພໍ່ຂອງເດັກເກີດມີຊີວິດກ່ອນ ອາຍຸ 15 ປີ | | ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ | ໄດ້ເປັນພໍ່ຂອງເດັກເກີດມີຊີວິດກ່ອນ ອາຍຸ 18 ປີ | |
| **ລວມ** | **2.7** | **0.3** | **2,405** | **29.3** | **3.0** | **1,773** |
| **ເຂດທີ່ພັກອາໄສ** | | | | | | |
| ຕົວເມືອງ | 1.1 | 0.0 | 721 | 15.6 | 0.6 | 527 |
| ຊົນນະບົດ | 3.3 | 0.4 | 1,685 | 35.2 | 4.1 | 1,246 |
| **ພາກ** | | | | | | |
| ເໜືອ | 4.3 | 0.4 | 703 | 35.7 | 3.9 | 583 |
| ກາງ | 1.9 | 0.2 | 1,236 | 24.7 | 2.4 | 846 |
| ໃຕ້ | 2.4 | 0.0 | 466 | 29.9 | 3.2 | 344 |
| **ແຂວງ** | | | | | | |
| ນະຄອນຫຼວງວຽງຈັນ | 0.7 | 0.0 | 288 | 11.0 | 2.4 | 210 |
| ຜົ້ງສາລີ | 5.4 | 0.0 | 56 | 40.7 | 5.6 | 54 |
| ຫຼວງນໍ້າທາ | 4.6 | 0.0 | 65 | 28.8 | 1.9 | 52 |
| ອຸດົມໄຊ | 2.5 | 0.0 | 122 | 40.6 | 2.8 | 106 |
| ບໍ່ແກ້ວ | 5.4 | 0.0 | 56 | 41.5 | 1.9 | 53 |
| ຫຼວງພະບາງ | 3.1 | 0.0 | 163 | 31.0 | 1.6 | 126 |
| ຫົວພັນ | 8.7 | 2.4 | 126 | 40.6 | 9.4 | 96 |
| ໄຊຍະບູລີ | 1.7 | 0.0 | 115 | 28.1 | 4.2 | 96 |
| ຊຽງຂວາງ | 2.9 | 0.0 | 105 | 31.4 | 2.9 | 70 |
| ວຽງຈັນ | 2.7 | 0.5 | 186 | 27.2 | 2.9 | 103 |
| ບໍລິຄໍາໄຊ | 1.8 | 0.0 | 113 | 23.9 | 0.0 | 71 |
| ຄໍາມ່ວນ | 1.6 | 0.0 | 125 | 27.3 | 1.6 | 128 |
| ສະຫວັນນະເຂດ | 2.4 | 0.5 | 375 | 31.4 | 2.5 | 236 |
| ສາລະວັນ | 4.0 | 0.0 | 149 | 41.7 | 8.3 | 108 |
| ເຊກອງ | 2.1 | 0.0 | 47 | 46.7 | 0.0 | 30 |
| ຈໍາປາສັກ | 1.4 | 0.0 | 221 | 19.4 | 1.2 | 170 |
| ອັດຕະປື | 2.1 | 0.0 | 48 | 33.3 | 2.8 | 36 |
| ໄຊສົມບູນ | 2.2 | 0.0 | 45 | 33.3 | 3.7 | 27 |
| **ລະດັບການສຶກສາ** | | | | | | |
| ບໍ່ມີການສຶກສາ | 18.0 | 0.0 | 50 | 51.3 | 14.1 | 78 |
| ຊັ້ນປະຖົມ | 4.0 | 1.2 | 425 | 40.4 | 4.2 | 453 |
| ຊັ້ນມັດທະຍົມຕົ້ນ | 3.5 | 0.2 | 970 | 37.0 | 2.4 | 533 |

| | ອັດຕາສ່ວນຮ້ອຍຂອງຜູ້ຊາຍ ອາຍຸ 15-19 ປີ | | ຈຳນວນ ຜູ້ຊາຍ ອາຍຸ 15-19 ປີ | ອັດຕາສ່ວນຮ້ອຍຂອງຜູ້ຊາຍ ອາຍຸ 20-24 ປີ | | ຈຳນວນ ຜູ້ຊາຍ ອາຍຸ 20-24 ປີ |
|---|---|---|---|---|---|---|
| | ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ | ໄດ້ເປັນພໍ່ຂອງເດັກເກີດມີຊີວິດກ່ອນ ອາຍຸ 15 ປີ | | ໄດ້ເປັນພໍ່ຂອງເດັກເກີດມີຊີວິດໜຶ່ງຄົນ | ໄດ້ເປັນພໍ່ຂອງເດັກເກີດມີຊີວິດກ່ອນອາຍຸ 18 ປີ | |
| ຊັ້ນມັດທະຍົມປາຍ | 0.4 | 0.0 | 907 | 19.1 | 2.5 | 393 |
| ວິຊາຊີບ/ຊັ້ນກາງ | 0.0 | 0.0 | 9 | 10.9 | 2.2 | 46 |
| ຊັ້ນສູງຂຶ້ນໄປ | 0.0 | 0.0 | 44 | 7.4 | 0.0 | 269 |
| **ກຸ່ມພາສາປາກເວົ້າ** | | | | | | |
| ລາວ-ໄຕ | 1.2 | 0.0 | 1,466 | 21.9 | 1.6 | 1,065 |
| ມອນ-ຂະແມ | 3.5 | 0.7 | 593 | 34.7 | 3.3 | 450 |
| ມົ້ງ-ມຽນ | 7.9 | 1.1 | 277 | 52.4 | 9.6 | 187 |
| ຈີນ-ຕີເບດ | 8.0 | 0.0 | 50 | 50.0 | 7.1 | 56 |
| ອື່ນໆ | 0.0 | 0.0 | 19 | 31.3 | 0.0 | 16 |
| **ດັດຊະນີຄວາມຢູ່ດີກິນດີ** | | | | | | |
| ທຸກຍາກທີ່ສຸດ | 6.4 | 1.0 | 420 | 47.0 | 7.3 | 368 |
| ທຸກ | 2.9 | 0.4 | 544 | 37.5 | 4.7 | 365 |
| ປານກາງ | 2.4 | 0.2 | 497 | 26.0 | 0.6 | 327 |
| ຮັ່ງ | 1.3 | 0.0 | 530 | 20.0 | 1.5 | 390 |
| ຮັ່ງທີ່ສຸດ | 0.7 | 0.0 | 414 | 14.9 | 0.9 | 323 |

ແຫຼ່ງຂໍ້ມູນ: LSIS II, 2017

## 3.4 ການດູແລກ່ອນເກີດຂອງໄວໜຸ່ມ

ຕາຕະລາງ 3.4 ສະແດງໃຫ້ເຫັນສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ແບ່ງຕາມຜູ້ໃຫ້ການດູແລກ່ອນເກີດ ໃນໄລຍະຖືພາລູກຜູ້ສຸດທ້າຍ. ໃນ ສປປ ລາວ ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ແລະ ໄດ້ຮັບການດູແລຢ່າງໜ້ອຍ ໜຶ່ງຄັ້ງ ໂດຍແພດທີ່ມີຄວາມຊຳນານ ມີປະມານ 78 ສ່ວນຮ້ອຍ ເຊິ່ງສ່ວນໃຫ່ແລ້ວ ແມ່ນໄດ້ຮັບການດູແລຈາກທ່ານໝໍ ປະມານ 56 ສ່ວນຮ້ອຍ ແລະ 20 ສ່ວນຮ້ອຍ ແມ່ນໄດ້ຮັບການດູແລຈາກພະຍາບານ/ຜະດຸງຄັນ. ເຖິງຢ່າງໃດກໍ່ຕາມ, ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ປະມານ 17.4 ສ່ວນຮ້ອຍ ແມ່ນບໍ່ໄດ້ຮັບການດູແລກ່ອນເກີດ ເຊິ່ງເປັນຄວາມສ່ຽງສູງຕໍ່ສຸຂະພາບຂອງແມ່ ແລະ ເດັກ ໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ ກວມເອົາອັດຕາສ່ວນສູງ ເຖິງ 20.1 ສ່ວນຮ້ອຍ.

ຖ້າເບິ່ງຕາມແຕ່ລະພາກແລ້ວເຫັນວ່າ ເຂດພາກໃຕ້ ເປັນເຂດທີ່ສ່ວນຮ້ອຍຂອງ ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ທີ່ບໍ່ໄດ້ຮັບການດູແລສູງກວ່າ ພາກອື່ນ (24.0 ສ່ວນຮ້ອຍ), ຮອງລົງມາແມ່ນເຂດພາກເໜືອ (17.4 ສ່ວນຮ້ອຍ) ແລະ ພາກກາງ (14.2 ສ່ວນຮ້ອຍ) ຕາມລຳດັບ. ສ່ວນແຂວງທີ່ເຫັນວ່າມີອັດຕາສ່ວນສູງກວ່າໝູ່ແມ່ນແຂວງຜົ້ງສາລີ, ຮອງລົງມາແມ່ນແຂວງສາລະວັນ ແລະ ຕາມດ້ວຍແຂວງເຊກອງ (55.7 ສ່ວນຮ້ອຍ; 39.2 ສ່ວນຮ້ອຍ ແລະ 31.0 ສ່ວນຮ້ອຍ). ການຂາດການດູແລກ່ອນການເກີດຂອງໄວໜຸ່ມ ໃນກຸ່ມພາສາ ຈີນ-ຕິເບດ ແມ່ນສູງກ່ວາໝູ່ ແລະ ຮອງລົງມາແມ່ນ ກຸ່ມພາສາ ມົ້ງ-ມຽນ (46.5 ສ່ວນຮ້ອຍ ແລະ 26.5 ສ່ວນຮ້ອຍ). ຕາຕະລາງ 3.4 ຍັງສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ການສຶກສາແມ່ນປັດໃຈທີ່ສຳຄັນເຮັດໃຫ້ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ບໍ່ໄດ້ຮັບການດູແລຈາກແພດທີ່ມີຄວາມຊຳນານ (ບໍ່ມີການສຶກສາ 45.0 ສ່ວນຮ້ອຍ; ຊັ້ນປະຖົມ 20.3 ສ່ວນຮ້ອຍ ແລະ  ວິຊາຊີບຂຶ້ນໄປ 0.0 ສ່ວນຮ້ອຍ). ໃນນັ້ນກຸ່ມຄົນທີ່ທຸກຍາກສຸດແມ່ນມີອັດຕາສ່ວນສູງສຸດ ແລະ ກຸ່ມຄົນທີ່ຮັ່ງມີທີ່ສຸດແມ່ນມີອັດຕາສ່ວນຕ່ຳສຸດ (39.5 ສ່ວນຮ້ອຍ ແລະ 1.5 ສ່ວນຮ້ອຍ).

ຕາຕະລາງ 3.4. ສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ເກີດລູກມີຊີວິດ ພາຍໃນ 2 ປີ ຜ່ານມາ ແບ່ງຕາມແບ່ງຕາມເຂດທີ່ພັກອາໄສ, ພາກ, ແຂວງ, ລະດັບການສຶກສາ, ອາຍຸ, ພາສາປາກເວົ້າ ແລະ ດັດຊະນີຄວາມຢູ່ດີກິນດີ

| | **ຜູ້ໃຫ້ບໍລິການດູແລກ່ອນເກີດ** | | | | | | **ສ່ວນຮ້ອຍຂອງແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ຮັບການດູແລຢ່າງໜ້ອຍໜຶ່ງຄັ້ງ ໂດຍແພດທີ່ມີຄວາມຊຳນານ** |
|---|---|---|---|---|---|---|---|
| | **ທ່ານໝໍ** | **ພະຍາບານ/ຜະດຸງຄັນ** | **ຜູ້ຊ່ວຍຜະດຸງຄັນ** | **ໝໍຕຳແຍ** | **ແພດຊຸມຊົນ** | **ບໍ່ໄດ້ຮັບການດູແລກ່ອນເກີດ** | |
| **ລວມ** | **56.0** | **20.0** | **2.0** | **0.0** | **4.4** | **17.4** | **78.0** |
| **ເຂດທີ່ພັກອາໄສ** | | | | | | | |
| ຕົວເມືອງ | 76.1 | 16.8 | 0.2 | 0.0 | 0.3 | 5.8 | 93.1 |
| ຊົນນະບົດ | 51.3 | 20.7 | 2.4 | 0.0 | 5.4 | 20.1 | 74.4 |
| **ພາກ** | | | | | | | |
| ເໜືອ | 53.3 | 21.0 | 2.7 | 0.1 | 5.6 | 17.4 | 77.0 |
| ກາງ | 60.3 | 18.7 | 2.2 | 0.0 | 4.2 | 14.2 | 81.1 |

| | ຜູ້ໃຫ້ບໍລິການດູແລກ່ອນເກີດ | | | | | | ສ່ວນຮ້ອຍຂອງ ແມ່ຍິງ ອາຍຸ 15-24 ປີ ທີ່ໄດ້ຮັບ ການດູແລຢ່າງ ໜ້ອຍໜຶ່ງຄັ້ງ ໂດຍ ແພດທີ່ມີຄວາມ ຊຳນານ |
|---|---|---|---|---|---|---|---|
| | ທ່ານໝໍ | ພະຍາບານ/ ພະດຸງຄັນ | ຜູ້ຊ່ວຍ ພະດຸງຄັນ | ໝໍຕຳແຍ | ແພດ ຊຸມຊົນ | ບໍ່ໄດ້ຮັບ ການດູແລ ກ່ອນເກີດ | |
| ໃຕ້ | 52.3 | 20.7 | 0.4 | 0.0 | 2.6 | 24.0 | 73.4 |
| **ແຂວງ** | | | | | | | |
| ນະຄອນຫຼວງວຽງຈັນ | 90.7 | 3.2 | 0.0 | 0.0 | 0.0 | 4.9 | 93.9 |
| ຜົ້ງສາລີ | 21.5 | 9.0 | 13.9 | 0.0 | 0.0 | 55.7 | 44.3 |
| ຫຼວງນ້ຳທາ | 24.2 | 56.1 | 10.0 | 0.0 | 1.9 | 7.8 | 90.2 |
| ອຸດົມໄຊ | 62.5 | 16.8 | 0.0 | 0.0 | 11.5 | 9.2 | 79.3 |
| ບໍ່ແກ້ວ | 44.5 | 35.5 | 0.0 | 0.0 | 0.0 | 20.1 | 79.9 |
| ຫຼວງພະບາງ | 48.5 | 31.7 | 0.0 | 0.0 | 0.8 | 19.1 | 80.2 |
| ຫົວພັນ | 57.1 | 7.9 | 2.7 | 0.3 | 17.5 | 14.5 | 67.7 |
| ໄຊຍະບູລີ | 94.0 | 0.0 | 0.0 | 0.0 | 0.0 | 6.0 | 94.0 |
| ຊຽງຂວາງ | 55.6 | 3.3 | 8.7 | 0.0 | 21.7 | 10.8 | 67.5 |
| ວຽງຈັນ | 69.2 | 18.3 | 0.9 | 0.0 | 0.9 | 10.6 | 88.4 |
| ບໍລິຄຳໄຊ | 38.0 | 49.2 | 2.2 | 0.0 | 0.0 | 10.6 | 89.4 |
| ຄຳມ່ວນ | 58.2 | 20.2 | 1.2 | 0.0 | 2.4 | 15.4 | 79.6 |
| ສະຫວັນນະເຂດ | 46.2 | 25.4 | 0.0 | 0.0 | 3.2 | 25.1 | 71.7 |
| ສາລະວັນ | 30.7 | 28.6 | 0.8 | 0.0 | 0.8 | 39.2 | 60.1 |
| ເຊກອງ | 51.1 | 10.0 | 0.0 | 0.0 | 7.9 | 31.0 | 61.1 |
| ຈຳປາສັກ | 79.8 | 6.8 | 0.0 | 0.0 | 3.3 | 10.1 | 86.6 |
